ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນພັດທະນາ
# ວຽກງານ ເຕັກໂນໂລຊີ ແລະ ການສື່ສານ ແຂວງໄຊຍະບູລີ
# 5 ປີ ( 2026-2030 )




ແຂວງໄຊຍະບູລີ ປີ2026

**ຄຳເຫັນຂອງ**

**ປະທານຄະນະກຳມະການປົກຄອງແຂວງ ໄຊຍະບູລີ.**



ຂ້າພະເຈົ້າ, ສະແດງຄວາມຍ້ອງຍໍຊົມເຊີຍ ທີ່ພະແນກເຕັກໂນໂລຊີ ແລະການສື່ສານແຂວງ ໄຊຍະບູລີ ໄດ້ເປັນເຈົ້າການຜັນຂະຫຍາຍ ແຜນພັດທະນາເສດຖະກິດ-ສັງຄົມ 5ປີ (2026-2030) ຂອງແຂວງ ໄຊຍະບູລີ ມາເປັນແຜນພັດທະນາ 5 ປີວຽກງານເຕັກໂນໂລຊີ ແລະ ການສື່ສານ (2026-2030) ຂອງຕົນ, ຜ່ານການຕິດຕາມຂະບວນການ ສ້າງແຜນກໍ່ເຫັນວ່າສອດຄ່ອງກັບຂັ້ນຕອນໂດຍລິເລີ່ມຈາກການ ແຕ່ງຕັ້ງຄະນະຮັບຜິດຊອບກະກຽມ, ມີການຈັດກອງປະຊຸມລະດົມ ແນວຄວາມຄິດຮ່ວມກັບພາກລັດ ແລະພາກທຸລະກິດຜູ້ປະກອບການ ພາຍໃນແຂວງກໍ່ຫລາຍຄັ້ງຢ່າງກວ້າງຂວາງ ຈົນກ້າວເຂົ້າສູ່ການຈັດກອງປະຊຸມຮັບຮອງຢ່າງເປັນທາງການຮ່ວມ ກັບກະຊວງສາຍຕັ້ງ; ສຳລັບດ້ານເນື້ອໃນ ຂອງພາກສະຫລຸບຕີລາຄາ ແລະພາກທິດທາງ ຂ້າພະເຈົ້າ, ເຫັນວ່າ ສອດຄ່ອງກັບຄວາມເປັນຈິງຂອງທ້ອງຖິ່ນແຂວງ ໄຊຍະບູລີ ຂອງພວກເຮົາ; ສິ່ງສຳຄັນແຜນພັດທະນາວຽກ ງານເຕັກໂນໂລຊີ ແລະການສື່ສານແຂວງ ໄຊຍະບູລີ ໃນຄັ້ງນີ້ ໄດ້ມີການກຳນົດວິໄສທັດຮອດປີ 2045, ຍຸດ ທະສາດ 10ປີ (2026-2035) ແລະແຜນພັດທະນາ 5ປີ (2026-2030) ຊຶ່ງໄດ້ກຳນົດອອກແຈ້ງ ເປັນ 03 ເປົ້າໝາຍທີ່ຈະພັດທະນາ, ມີ 08 ແຜນງານຈຸດສຸມ ແລະ ມີ 14 ໂຄງການຊ່ວຍ ໜຸນ ຊຶ່ງບັນດາຄາດໝາຍຕົວ ຊີ້ວັດ ດັ່ງກ່າວ ເຫັນວ່າມີຄວາມສອດຄ່ອງກັບແຜນພັດທະນາເສະຖະກິດ-ສັງຄົມ 05 ປີ (2026-2030) ຄັ້ງທີ VIII ຂອງແຂວງ ໄຊຍະບູລີ ແລະ ໄປຕາມຕາມແຜນວຽກຈຸດສຸມໃນແຜນພັດທະນາເສດຖະກິດສັງຄົມ 05 ປີ (2026-2030) ຄັ້ງທີ X ຂອງລັດຖະບານ ກ່ຽວກັບວຽກງານການພັດທະນາເຕັກໂນໂລຊີ ແລະ ການສື່ສານ ທີ່ໄດ້ຖືກບັນຈຸເຂົ້າໃນ 6 ເປົ້າ ໝາຍ ກັບ 24 ໜ້າວຽກຈຸດສູມ; ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ 05 ປີ (2026-2030) ຂອງແຂວງ ໄຊຍະບູລີ ສະບັບນີ້ມີເນື້ອໃນພົວພັນໄປຫຼາຍຂະແໜງການປົ່ນ ອ້ອມ ທີ່ຈະໄດ້ຈັດຕັ້ງປະຕິບັດຮ່ວມກັນ, ພົວພັນກັບໂຄງການການເມືອງຂອງພັກສະບັບທີ 3; ດັ່ງນັ້ນ, ຮຽກຮ້ອງມາຍັງບັນດາພະແນກການ, ຂະແໜງການອ້ອມຂ້າງແຂວງ, ເມືອງ, ຕາແສງ ແລະ ທຸກພາກສ່ວນໃນ ສັງຄົມນຳເອົາແຜນພັດທະນາ 05ປີ ຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານແຂວງ ໄຊຍະບູລີ ເຂົ້າເຊື່ອມສານ ກັບແຜນພັດທະນາຂອງຕົນຢ່າງກົມກຽວ ເພື່ອຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດຜັນຂະຫຍາຍ **03 ເສົາຄ້ຳດີ ຈິຕອນຄື: ລັດດີຈິຕອນ, ເສດຖະກິດດີຈິຕອນ ແລະ ສັງຄົມດີຈິຕອນ ຢູ່ພາຍໃນແຂວງ ປະກົດຜົນເປັນຈິງ** ຊ່ວຍ ຍົກລະດັບປະສິດທິພາບຂອງການບໍລິຫານ, ການຜະລິດ, ການຄ້າ, ການເງິນ ແລະ ການບໍລິການໃຫ້ມີຄຸນນະພາບ ດີຂຶ້ນ ທັງເປັນການຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 05ປີ ຂອງ ແຂວງໄຊ ຍະບູລີ (2026-2030) ມີທ່ວງທ່າຂະຫຍາຍຕົວດ້ວຍຈັ່ງຫວະທີ່ໄວຂຶ້ນຕາມທິດ ສ້າງເສດຖະກິດເອກະລາດເປັນ ເຈົ້າຕົນເອງ, ປະຊາຊົນຮັ່ງມີຜາສຸກ, ແຂວງມີຄວາມໝັ້ນຄົງເຂັ້ມແຂງ, ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**ຄະນະກຳມະການປົກຄອງແຂວງ**

**ປະທານ**

ຄອງສາ ໄຊຍະວົງ

**ຄໍາເຫັນຂອງ**

**ຫົວໜ້າພະແນກເຕັກໂນໂລຊີ ແລະການສື່ສານແຂວງ**



ແຜນຍຸດທະສາດພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບເງື່ອນໄຂ ແລະ ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່, ການປັບຕົວຕາມທ່າອ່ຽງການປ່ຽນແປງໃໝ່ ແລະ ການຂະຫຍາຍຕົວທາງດ້ານການເມືອງ, ສັງຄົມ, ເສດຖະກິດ, ການຄ້າ, ການລົງທຶນ ວິທະຍາສາດເຕັກໂນໂລຊີ ຢູ່ພາກພື້ນ ແລະ ສາກົນ, ສະພາບຄວາມເປັນຈິງຢູ່ພາຍໃນປະເທດເວົ້າລວມ, ເວົ້າສະເພາະພາຍໃນແຂວງ ໄຊຍະບູລີ ເປັນພື້ນຖານແນວຄິດ ແລະກໍານົດເນື້ອໃນຍຸດທະສາດຢ່າງລະອຽດໃນສະບັບນີ້; ຜ່ານການຈັດຕັ້ງປະຕິບັດແຜນພັດທະນາ ວຽກງານ ເຕັກໂນໂລຊີ ແລະ ການສື່ສານ ແຂວງໄຊຍະບູລີ 05 ປີ ( 2021-2025) ພວກເຮົາໄດ້ມີຜົນສໍາເລັດຫຼາຍດ້ານ ແຕ່ກໍ່ຍັງມີຂໍ້ຄົງຄ້າງຈໍານວນໜຶ່ງທີ່ຈະຕ້ອງປັບປຸງ ແລະ ແກ້ໄຂ, ຜົນສໍາເລັດ ແລະ ຂໍ້ຄົງຄ້າງເຫຼົ່ານັ້ນ ເປັນບົດຮຽນອັນລໍ້າຄ່າ ແລະ ເປັນບ່ອນອີງພື້ນຖານໃນການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ, ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານແຂວງໄຊຍະບູລີ 05ປີ (2026-2030); ໃນການສ້າງແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານແຂວງໄຊຍະບູລີ 05ປີ (2026-2030) ບົນພື້ນຖານການຜັນຂະຫຍາຍ ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ 05 ປີ ຄັ້ງທີ IV ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ, ແຜນພັດທະນາ ເສດຖະກິດ-ສັງຄົມ 05 ປີ ຄັ້ງທີ VIII (2026-2030) ຂອງແຂວງໄຊຍະບູລີ; ໂຄງປະກອບຂອງແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ແຂວງໄຊຍະບູລີ 05ປີ (2026-2030) ມີ 3ພາກໃຫຍ່ຄື: **ພາກທີ I :** ສະພາບການພັດທະນາ ວຽກງານເຕັກໂນໂລຊີ ແລະ ການສື່ສານ ແຂວງ 05ປີ (2021-2025) ຍົກໃຫ້ເຫັນຜົນສໍາເລັດ, ສັງເກດຕີລາຄາຜົນສໍາເລັດທີ່ພົ້ນເດັ່ນ, ສາເຫດ ແລະ ປັດໃຈທີ່ພາໃຫ້ມີຜົນສໍາເລັດ, ຂໍ້ຄົງຄ້າງ ແລະ ສາເຫດ, ບົດຮຽນທີ່ຖອດຖອນໄດ້; **ພາກທີ II**: ແຜນພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານແຂວງໄຊຍະບູລີ 5 ປີ (2026-2030) ເຊິ່ງປະກອບມີ : ຍຸດທະສາດການພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ໄລຍະ 10 ປີ (2026-2035) ແລະ ວິໄສທັດຮອດປີ 2045, ແຜນພັດທະນາຂະແໜງເຕັກໂນໂລຊີ ແລະ ການສື່ສານ 05 ປີ (2025-2030) ມີ 07 ໜ້າທີ່ຫຼັກ ແລະ 03 ເປົ້າໝາຍການພັດທະນາ ແລະ 08 ແຜນງານຈຸດສຸມ; **ສໍາລັບພາກທີ III:** ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດ ຍົກໃຫ້ເຫັນວິທີການຈັດຕັ້ງປະຕິບັດແຜນຍຸດທະສາດ.

**ຫົວໜ້າພະແນກ**

**ເຕັກໂນໂລຊີ ແລະ ການສື່ສານແຂວງ ໄຊຍະບູລີ**

**ຂອນຂະຫວັນ ຈັນທະວົງ**

## ສາລະບານ


ພາກທີ I ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ເຕັກໂນໂລຊີ ແລະ ການສື່ສານ 05 ປີ ( 2021 - 2025 ). 1

I. ສະພາບລວມ ........ 1

II. ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ 05 ປີ ( 2021-2025 ). ........ 2

1. ວຽກງານການເມືອງ - ແນວຄິດ ........ 2

2. ວຽກງານຈັດຕັ້ງ ແລະ ການພັດທະນາບຸກຄະລາກອນ ........ 2

3. ການພັດທະນາວຽກງານໄປສະນີ ແລະ ໂທລະຄົມມະນາຄົມ ........ 3

4. ການພັດທະນາວຽກງານບໍລິຫານລັດ ແລະ ບໍລິການລັດດິຈິຕອນ ........ 5

5. ການພັດທະນາວຽກງານ ເຕັກໂນໂລຊີ ແລະ ນະວັດຕະກຳ ........ 6

III. ສະຫຼຸບຕີລາຄາ ດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ........ 6

1. ດ້ານດີ ........ 6

2. ດ້ານອ່ອນ ແລະ ຂໍ້ຄົງຄ້າງ ........ 7

3. ບົດຮຽນທີ່ຖອດຖອນໄດ້ ........ 7

ພາກທີ II ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ແຂວງໄຊຍະບູລີ 05 ປີ ( 2026-2030 ) ...... 9

I. ສະພາບແວດລ້ອມເອື້ອອຳນວຍ ແລະ ສິ່ງທ້າທາຍ ........ 9

1. ສະພາບແວດລ້ອມທີ່ເອື້ອອຳນວຍ ........ 9

2. ສິ່ງທ້າທາຍ ........ 9

II. ຍຸດທະສາດການພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ ໄລຍະ 10 ປີ (2026-2035) ແລະ ວິໄສທັດຮອດປີ 2045. ........ 10

I. ວິໄສທັດ ຮອດປີ 2045 ........ 10

II. ຍຸດທະສາດ ຮອດປີ 2035 ........ 10

1.1. ຍຸດທະສາດການພັດທະນາບຸກຄະລາກອນ: ........ 10

1.2. ຍຸດທະສາດການພັດທະນາລະບົບບໍລິຫານລັດ ແລະ ການບໍລິການແບບດິຈິຕອນ: ........ 11

1.3. ຍຸດທະສາດການພັດທະນາໄປສະນີ ແລະ ພື້ນຖານໂຄງລ່າງ ໂທລະຄົມມະນາຄົມ: ........ 11

1.4. ຍຸດທະສາດການສ້າງນະວັດຕະກຳ ໄອຊີທີ: .......... 11

III. ແຜນພັດທະນາ ວຽກງານເຕັກໂນໂລຊີ ແລະ ການສື່ສານ 05ປີ (2026-2030). .......... 11

1. ທິດທາງ, ໜ້າທີ່ລວມ .......... 11

2. ເປົ້າໝາຍ, ຄາດໝາຍ ແລະ ແຜນງານຈຸດສຸມ .......... 13

ເປົ້າໝາຍທີ I: ພັດທະນາບຸກຄະລະກອນ ທັງພາກລັດ ແລະ ເອກະຊົນ ໃຫ້ມີຄວາມຮູ້ ແລະ ຄວາມສາມາດ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ມີຄວາມພ້ອມໃນຂະບວນການຫັນເປັນລັດດີຈີຕອນ ເພື່ອປະກອບສ່ວນພັດທະນາແຂວງຢ່າງມີປະສິດທິພາບ. .......... 13

1. ຄາດໝາຍຕົວຊີ້ວັດ .......... 13

2. ແຜນງານຈຸດສຸມ .......... 13

ເປົ້າໝາຍທີ II : ການຫັນເປັນເສດຖະກິດດີຈີຕອນ ເພື່ອຍູ້ແຮງການພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວໄວ ໃນຍຸກ 4.0. .......... 15

1. ຄາດໝາຍຕົວຊີ້ວັດ .......... 15

2. ແຜນງານຈຸດສຸມ .......... 16

ເປົ້າໝາຍທີ III: ສົ່ງເສີມ ແລະ ນຳໃຊ້ວິທະຍາສາດ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເພື່ອຍົກສູງປະສິດ ທິພາບການຜະລິດ. .......... 19

1. ຄາດໝາຍຕົວຊີ້ວັດ .......... 19

2. ແຜນງານຈຸດສຸມທີ 1: ສົ່ງເສີມ ແລະ ນຳໃຊ້ວິທະຍາສາດ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເພື່ອຍົກສູງປະສິດທິພາບການຜະລິດ. .......... 19

ພາກທີ III ມາດຕະການ ແລະ ວິທີຈັດຕັ້ງປະຕິບັດແຜນພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ ແຂວງໄຊຍະບູລີ 05 ປີ ( 2026-2030 ) .......... 20

I. ມາດຕະການ .......... 20

II. ວິທີການຈັດຕັ້ງປະຕິບັດ .......... 20

# ພາກທີ I
# ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ
# ເຕັກໂນໂລຊີ ແລະ ການສື່ສານ 05 ປີ ( 2021 - 2025 )

## I. ສະພາບລວມ

ພາຍຫຼັງມີມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 06/ກມສພ, ລົງວັນທີ 25 ກຸມພາ 2021 ວ່າດ້ວຍການຍຸບເລີກກົງຈັກການຈັດຕັ້ງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຢູ່ຂັ້ນແຂວງ ກໍ່ໄດ້ປະກາດຍຸບເລີກ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ໃນຄັ້ງວັນທີ 25 ມິຖຸນາ 2021 ແລະ ໄດ້ມອບໂອນວຽກງານ, ບຸກຄະລາກອນ ໄປຂຶ້ນກັບຂະແໜງການກ່ຽວຂ້ອງ ແລະ ໄດ້ມອບໂອນ ຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ, ຂະແໜງ ເຕັກໂນໂລຊີ ມາຂຶ້ນກັບ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ, ພ້ອມທັງປະກາດຮັບຮອງປ່ຽນຊື່ກົງຈັກການຈັດຕັ້ງ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ ມາເປັນ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ໄຊຍະບູລີ ເພື່ອເຮັດໜ້າທີ່ຄຸ້ມຄອງມະຫາພາກ ດ້ານເຕັກໂນໂລຊີ ແລະ ການສື່ສານພາຍໃນແຂວງ ປະກອບສ່ວນເຂົ້າໃນການປະຕິບັດສອງໜ້າທີ່ຍຸດທະສາດໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ; ເສີມສ້າງຄວາມເຂັ້ມແຂງ ແລະ ສືບຕໍ່ສ້າງເປັນຂະແໜງການໜຶ່ງທີ່ມີບົດບາດສຳຄັນໃນການຂັບເຄື່ອນ ແລະ ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໂດຍເລີ່ມຈາກການຊຸກຍູ້ສົ່ງເສີມການນຳໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ICT) ເຂົ້າໃນຂົງເຂດວຽກງານໃນທົ່ວສັງຄົມເທື່ອລະກ້າວ ເພື່ອກະຕຸກຊຸກຍູ້ການຜະລິດ, ການຄ້າການບໍລິການ, ການຫັນເປັນທັນສະໄໝດ້ວຍລະບົບດີຈິຕອນ, ຊຸກຍູ້ສາຂາບໍລິສັດໄປສະນີ ແລະ ໂທລະຄົມມະນາຄົມ ໃນການເຄື່ອນໄຫວສ້າງລາຍຮັບມອບພັນທະເຂົ້າງົບປະມານຂອງລັດ; ຍ້ອນການບໍລິການດ້ານໄປສະນີ ແລະ ໂທລະຄົມມະນາຄົມ ໄດ້ມີການຂະຫຍາຍຕົວດ້ານປະລິມານ ແລະ ຄຸນນະພາບດ້ວຍການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ; ສະນັ້ນ ການສະຫຼຸບຜົນງານ 05 ປີ ຂອງຂະແໜງເຕັກໂນໂລຊີ ແລະການສື່ສານຈະໄດ້ເອົາຜົນງານຂອງຂະແໜງໄປສະນີ , ໂທລະຄົມມະນາຄົມ ແລະ ການສື່ສານ ໃນເມື່ອກ່ອນມາເປັນຫຼັກ ແລະ ຊຸບຊ້ອນບາງວຽກງານຂອງພາກສ່ວນທີ່ຍົກຍ້າຍມາເຂົ້າໃນຫົວຂໍ້ທີ່ເໝາະສົມ.

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ໄດ້ຄົ້ນຄ້ວາ, ຈັດຕັ້ງ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ ແລະ ແຜນພັດທະນາຂະແໜງເຕັກໂນໂລຊີ ແລະ ການສື່ສານ ໄລຍະ 05 ປີ (2021-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມ 05 ປີຂອງແຂວງ ມາເປັນອັນສະເພາະ ເພື່ອພັດທະນາຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ມີຄວາມທັນສະໄໝ ສາມາດຂັບເຄື່ອນ ເສດຖະກິດ-ສັງຄົມ ຂອງແຂວງ ກ້າວໄປຢ່າງບໍ່ຢຸດຢັ້ງ ຜ່ານການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຈຸດສຸມໃນໄລຍະຜ່ານມາສາມາດຍາດໄດ້ຜົນງານຫຼາຍດ້ານສະຫຼຸບໄດ້ດັ່ງນີ້ :

## II. ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ 05 ປີ ( 2021-2025 ).

### 1. ວຽກງານການເມືອງ - ແນວຄິດ

ຄະນະພັກ-ຄະນະພະແນກເຕັກໂນໂລຊີ ແລະ ການສື່ສານ ຍາມໃດກໍ່ຖືເອົາວຽກງານການສຶກສາອົບຮົມ ທາງດ້ານການເມືອງ-ແນວຄິດເປັນວຽກງານ ແຖວໜ້າ ເພື່ອນຳພາດ້ານການເມືອງ-ແນວຄິດ ໃຫ້ຖັນແຖວພະນັກງານໃນຂອບເຂດຄວາມຮັບຜິດຊອບຢ່າງເປັນປົກກະຕິ ເພື່ອຮັບປະກັນການເຄື່ອນໄຫວປະຕິບັດໜ້າທີ່ຂອງພັກໃນແຕ່ລະໄລຍະ ໃຫ້ກ້າວໄປສູ່ຜົນສຳເລັດຕາມລະດັບຄາດໝາຍ ໂດຍຈັດຕັ້ງເຜີຍແຜ່ແນວທາງນະໂຍບາຍ, ມະຕິ, ຄຳສັ່ງຕ່າງໆຂອງພັກ, ນອກນັ້ນຍັງໄດ້ນຳພາບັນດາສະມາຊິກພັກ-ພະນັກງານ ເຂົ້າຮ່ວມເຊື່ອມຊຶມມູນເຊື້ອໃນວັນສຳຄັນຕ່າງໆທາງດ້ານປະຫວັດສາດຂອງພັກ ກໍ່ຄືຂອງຊາດເຮັດໃຫ້ພະນັກງານ-ລັດຖະກອນມີທັດສະນະຫຼັກໝັ້ນມີແນວຄິດອຸ່ນອ່ຽນທຸ່ນທ່ຽງ, ຍົກສູງສະຕິລະວັງຕົວຕໍ່ກົນອຸບາຍຂອງກຸ່ມຄົນບໍ່ດີ, ສ້າງໃຫ້ມີແບບແຜນວິທີເຮັດວຽກມີຄວາມຫ້າວຫັນໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະທີ່ຕົນຮັບຜິດຊອບຢ່າງຕັ້ງໜ້າ, ເປັນເຈົ້າການໃນການຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດຕາມທິດທາງນະໂຍບາຍຂອງພັກກໍ່ຄື ຜັນຂະຫຍາຍບັນດານິຕິກຳຂອງຕົນ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ເຂົ້າສູ່ວຽກງານຕົວຈິງ ມີຄວາມສາມັກຄີເປັນເອກະພາບ ແລະ ຕໍ່ຕ້ານທຸກປະກົດການຫຍໍ້ທໍ້ຕ່າງໆ.

### 2. ວຽກງານຈັດຕັ້ງ ແລະ ການພັດທະນາບຸກຄະລາກອນ

ສະພາບບຸກຄະລາກອນພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ມີພະນັກງານ ທັງໝົດ 25 ທ່ານ, ຍິງ 10 ທ່ານ, ປະກອບມີ 04 ຂະແໜງການຄື: ຂະແໜງບໍລິຫານ,ຈັດຕັ້ງ ແລະ ກວດກາ, ຂະແໜງໄປສະນີ ແລະ ການສື່ສານ, ຂະແໜງບໍລິຫານລັດດີຈິຕອນ ແລະ ຄວາມປອດໄພໄຊເບີ, ຂະແໜງເຕັກໂນໂລຊີ ແລະ ນະວັດຕະກຳ; ມີຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ປະຈຳເມືອງ 03 ເມືອງ ຄື: ຫ້ອງການເຕັກໂນໂລຊີ ແລະ ການສື່ສານເມືອງ ປາກລາຍ ມີພະນັກງານທັງໝົດ: 07 ທ່ານ, ຍິງ 02 ທ່ານ; ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງໄຊຍະບູລີ ມີພະນັກງານທັງໝົດ: 07 ທ່ານ, ຍິງ 04 ທ່ານ; ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ ຫົງສາ ມີພະນັກງານທັງໝົດ: 05 ທ່ານ, ຍິງ 03 ທ່ານ; ມີຜູ້ປະສານງານວຽກ ເຕັກໂນໂລຊີ ແລະ ການສື່ສານ ປະຈຳເມືອງ 08 ເມືອງ ເມືອງລະ 01 ທ່ານ ທີ່ປະຈຳຢູ່ຫ້ອງວ່າການເມືອງ.

ສະພາບການປັບປຸງກົງຈັກການຈັດຕັ້ງ ໄລຍະຜ່ານມາ ໄດ້ຮັບການເອົາໃຈໃສ່ ຈາກກະຊວງສາຍຕັ້ງ ແລະ ຄະນະປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ ໃນການປັບປຸງຊັບຊ້ອນບຸກຄະລາກອນ; ການກຳນົດພາລະບົດບາດ, ໜ້າທີ່ ເພື່ອໃຫ້ແທດເໝາະກັບໜ້າວຽກຕົວຈິງຂອງທ້ອງຖິ່ນຮາກຖານ ເຮັດໃຫ້ກົງຈັກການຈັດຕັ້ງກະທັດຮັດ, ມີຄຸນນະພາບ; ໄດ້ປະກາດຮັບຮອງປ່ຽນຊື່ກົງຈັກການຈັດຕັ້ງຈາກ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ ມາເປັນ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ໄຊຍະບູລີ; ຕະຫຼອດ 5 ປີ ຜ່ານມາ ໄດ້ຮັບຮອງ ແລະ ປະກາດແຕ່ງຕັ້ງ ຂັ້ນຫົວໜ້າພະແນກມີການສັບປ່ຽນ 03 ທ່ານ ໃນນີ້ ໄດ້ອອກພັກ-ຮັບອຸດໜູນບຳນານ

02 ທ່ານ, ພອມດຳ ລົງຕຳ ແໜ່ງ 01 ທ່ານ; ໄດ້ຮັບຮອງ ແລະ ປະກາດແຕ່ງຕັ້ງ ຂັ້ນຮອງຫົວໜ້າພະແນກ 05 ທ່ານ, ຍິງ 02 ທ່ານ; ໃນນີ້ ໄດ້ອອກພັກການ-ຮັບອຸດໜູນບຳນານ 02 ທ່ານ, ພອມດຳລົງຕຳແໜ່ງ 03 ທ່ານ; ສຳລັບຂັ້ນຫົວໜ້າຮອງຂະແໜງ ຕາມຕຳແໜ່ງງານທີ່ກຳນົດໄວ້ ມີ 04 ຂະແໜງ ເຊິ່ງໄດ້ກຳນົດ 03 ຂະແໜງວິຊາການ, ມີຮອງຂະແໜງ 01 ທ່ານ, ສ່ວນຂະແໜງບໍລິຫານ,ຈັດຕັ້ງ ແລະ ກວດກາ ໄດ້ກຳນົດຮອງຂະແໜງ 02 ທ່ານ ຕະຫຼອດໄລຍະ 05 ປີຜ່ານມາ ສາມາດສ້າງພະນັກງານ ທີ່ມີຄຸນສົມບັດຄົບຕາມມາດຖານເງື່ອນໄຂ ແຕ່ງຕັ້ງເຂົ້າບັນຈຸ ຫົວໜ້າຂະແໜງ 02 ທ່ານ, ຮອງຫົວໜ້າຂະແໜງ 03 ທ່ານ, ຍິງ 01 ທ່ານ; ພະນັກງານອອກພັກຜ່ອນຮັບເບັຍບຳນານ 06 ທ່ານ, ຍິງ 02 ທ່ານ; ພະນັກງານອອກພັກຜ່ອນ ສ້າງເສດຖະກິດຄອບຄົວ (ຮັບເງິນອຸດໜູນເທື່ອດຽວ) 03 ທ່ານ, ຍິງ 01 ທ່ານ; (ຂັ້ນເມືອງ 01 ທ່ານ); ພະນັກງານຍົກຍ້າຍໄປປະຈຳການຢູ່ພະແນກການອື່ນ 02 ທ່ານ, ຍິງ 01 ທ່ານ ແລະ ພະນັກງານ ທີ່ຍົກຍ້າຍມາໃໝ່ ຈຳນວນ 03 ທ່ານ; ໄດ້ນຳສົ່ງພະນັກງານ-ລັດຖະກອນໄປຍົກລະດັບທິດສະດີການເມືອງ-ການປົກຄອງຂັ້ນຕ່າງໆ ຈຳນວນ 05 ທ່ານ, ຍິງ 02 ທ່ານ, ສົ່ງພະນັກງານເຂົ້າຮຽນບຳລຸງກົດໝາຍໄລຍະສັ້ນ 45 ວັນ 05 ທ່ານ, ຍິງ 01 ທ່ານ, ສົ່ງພະນັກງານເຂົ້າຮຽນບຳລຸງ ພາສາຫວຽດນາມ ຢູ່ ສສ ຫວຽດນາມ 9 ເດືອນ ຈຳນວນ 01 ທ່ານ;

ໄດ້ຂຽນບົດສະເໜີໂຄງການລົງທຶນຂອງລັດ ຈຳນວນ 04 ໂຄງການສົ່ງໃຫ້ພະແນກແຜນການ ແລະ ການລົງທຶນ ແຂວງ ແລະ ໄດ້ຮັບ ໂຄງການກໍ່ສ້າງສູນຝຶກອົບຮົມໄອຊີທີ ແລະ ອຸປະກອນໄອຊີທີ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ຈາກສະຖານທູດອິນເດຍ ປະຈຳ ສປປລາວ ພາຍໃຕ້ໂຄງການຮ່ວມມືແມ່ຂອງ-ແມ່ນ້ຳຄົງຄາ Mekong Ganga Cooperation (MGC); ສັງລວມຕົວເລກສະຖິຕິ ຕົວຊີ້ບອກ ດ້ານໄປສະນີ ແລະ ໂທລະຄົມມະນາຄົມ ເພື່ອສ້າງປີຖານການຄິດໄລ່ລວມຍອດຜະລິດຕະພັນພາຍໃນ (GDP) ຂອງແຂວງ (ສົ່ງ ພະແນກແຜນການ ແລະ ການລົງທຶນ ແຂວງ); ການເກັບລາຍຮັບວິຊາການ ດ້ານເຕັກໂນໂລຊີ ແລະ ການສື່ສານ 05 ປີ ໄດ້ທັງໝົດ: 905,446,000 ກີບ; **ໃນນັ້ນ** ຄ່າທຳນຽມ = 3,137,000 ກີບ; ຄ່າບໍລິການ = 901,678,000 ກີບ.

## 3. ການພັດທະນາວຽກງານໄປສະນີ ແລະ ໂທລະຄົມມະນາຄົມ

ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາ ບໍລິສັດ ໄປສະນີລາວ ສາຂາ ແຂວງ ແລະ ບັນດາຫົວໜ່ວຍດຳເນີນທຸລະກິດເອກະຊົນທີ່ໃຫ້ບໍລິການຈັດສົ່ງແຈກຢາຍເຄື່ອງ ໄປສະນີ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບ ແລະ ກົດໝາຍໄດ້ກຳນົດໄວ້; ໃນທົ່ວແຂວງ ມີ ສາຂາບໍລິສັດໄປສະນີລາວ 01 ບໍລິສັດ ແລະ ບໍລິສັດຮັບຝາກ-ຈັດສົ່ງ ແລະ ແຈກຢາຍເຄື່ອງໄປສະນີ ທີ່ໃຫ້ບໍລິການ ມີຈຳນວນ 09 ຫົວໜ່ວຍ,ໃນຕະຫຼອດໄລຍະ 05 ປີ ຜ່ານມາ ບໍລິສັດທີ່ໃຫ້ບໍລິການດ້ານໄປສະນີໄດ້ເພີ່ມຂຶ້ນ ຈຳນວນ 05 ຫົວໜ່ວຍ; ມີປ່ອງບໍລິການທັງໝົດ 102 ປ່ອງ ທຽບໃສ່ແຜນ 05 ປີ ເພີ່ມຂຶ້ນ 97 ປ່ອງບໍລິການ; ສຳລັບການບໍລິການຈັດສົ່ງ ແລະ ແຈກຢາຍ ພັດສະດຸໄປສະນີ ຂອງພາກເອກະຊົນ ຮູບແບບແຟນຊາຍ ມີການຂະຫຍາຍປ່ອງບໍລິການ ກວມເອົາ 22 ຕາແສງ ເທົ່າກັບ 48.89% ຂອງຕາແສງທັງໝົດພາຍໃນແຂວງ.

ການດຳເນີນທຸລະກິດຂອງສາຂາບໍລິສັດໄປສະນີລາວແຂວງໄຊຍະບູລີ ມີຫ້ອງການ ປະຈຳຢູ່ 05 ເມືອງຄື: ໄປສະນີ ເມືອງ ຊຽງຮ່ອນ, ໄປສະນີ ເມືອງ ຫົງສາ, ໄປສະນີ ເມືອງ ປາກລາຍ, ໄປສະນີ ເມືອງພຽງ (ບ້ານເມືອງ

ພຽງ); ໄປສະນີ ເມືອງ ພຽງ ( ບ້ານ ນ້ຳປຸຍ ); ມີຈ່າມໄປສະນີ 13 ແຫ່ງ ( ຈ່າມຂົນສົ່ງ 08 ແຫ່ງ ), ສາຂາຈຳໜ່າຍ ສະແຕມ 06 ແຫ່ງ, ຕູ້ໄປສະນີຖືກນຳໃຊ້ 22 ຕູ້, ໄດ້ຮັບຝາກໄປສະນີພັນ ພາຍໃນ 951 ກິໂລ, ຮັບຝາກໄປສະນີພັນ ຕ່າງປະເທດ 14,481.03 ກິໂລ, ເມດ່ວນ ພາຍໃນ 1,134 ສະບັບ; ເມດ່ວນ ຕ່າງປະເທດ 580 ສະບັບ; ໃນ ຕະຫຼອດໄລຍະ 05 ປີ ສາມາດສ້າງລາຍຮັບໄດ້ທັງໝົດ: 1,746 ລ້ານກີບ; ໄດ້ຊຸກຍູ້ການເກັບໜີ້ສິນຂອງສະຖາບັນ ເງິນຝາກ ຂອງ ບໍລິສັດ ໄປສະນີລາວ ສາຂາແຂວງໄຊຍະບູລີ ທີ່ຍັງຄ້າງຈຳນວນ 110 ບັນຊີ, ຈຳນວນເງິນ 1,4 ຕື້ ກວ່າກີບ, ປະຈຸບັນສາມາດເກັບກູ້ຄືນໄດ້ 68 ບັນຊີ ເທົ່າກັບ 61,81% ຄິດເປັນຈຳນວນເງິນ 1,000 ລ້ານກວ່າກີບ;.

ໄດ້ອອກ, ຕໍ່ອະນຸຍາດ ການນຳໃຊ້ ຄື້ນຄວາມຖີ່ວິທະຍຸສື່ສານ (ໂຟນີ) ຈຳນວນ 12 ຄັ້ງ; ເລກໝາຍພິເສດ 03 ຕົວເລກ, 04 ຕົວເລກ ຈຳນວນ 08 ຄັ້ງ; ສະເໜີໃຫ້ກົມຄື້ນຄວາມຖີ່ຢັ້ງຢືນ ອຸປະກອນໂດຣນ ທັງໝົດ 04 ເຄື່ອງ;

ໃນຕະຫຼອດໄລຍະ 05 ປີຜ່ານມາໄດ້ເອົາໃຈ່ໃສ່ຊຸກຍູ້ສາຂາບໍລິສັດໂທລະຄົມມະນາຄົມ ໃນການຂະຫຍາຍ ພື້ນຖານໂຄງລ່າງ ດ້ວຍການລົງສຳຫຼວດພື້ນທີ່ ໃນເຂດບ້ານທີ່ມີສັນຍານຕ່ຳ ແລະ ບ້ານທີ່ບໍ່ມີສັນຍານ ເພື່ອສ້າງ ເງື່ອນໄຂຊຸກຍູ້ບໍລິສັດ ປັບປຸງ ແລະ ກໍ່ສ້າງຄືນໃໝ່ໄດ້ 5 ຄັ້ງ, ໃນນີ້ແກ້ໄຂບ້ານບໍ່ມີສັນຍານໄດ້ 02 ບ້ານຄື: ບ້ານພູ ດອກໄມ້ ເມືອງຫົງສາ ແລະ ບ້ານນ້ຳໂຕ່ມ ເມືອງຄອບ, ປັບປຸງບ້ານທີ່ມີສັນຍານຕ່ຳ ໄດ້ 16 ບ້ານ; ປະຈຸບັນແຂວງ ໄຊຍະບູລີ ມີບໍລິສັດທີ່ໃຫ້ການບໍລິການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ຈຳນວນ 03 ສາຂາບໍລິສັດ, ໃນ ໄລຍະ 05 ປີຜ່ານມາສາມາດຂະຫຍາຍສາຍກາບໄຍແສງ (Optical Fiber Cable) ໄດ້ 964 ກິໂລແມັດ ມາຮອດ ປະຈຸບັນມີສາຍກາບໄຍແກ້ວ ທັງໝົດຍາວ 5,137 ກິໂລແມັດ ກວມເອົາ 11 ເມືອງ, ຂະຫຍາຍເສົາສະຖານີຮັບ-ສົ່ງ ສັນຍານໂທລະສັບມືຖືໄດ້ທັງໝົດ: 19 ຕົ້ນ, ມາຮອດປະຈຸບັນມີເສົາສະຖານີຮັບ-ສົ່ງສັນຍານໂທລະສັບມືຖື ທັງໝົ ດ 440 ຕົ້ນ; ຂະຫຍາຍສະຖານີໂທລະສັບມືຖື 2G, 3G, 4G ໄດ້ທັງໝົດ 266 ສະຖານີ, ມາຮອດປະຈຸບັນ ມີ ສະຖານີໂທລະສັບມືຖື 2G, 3G, 4G ທັງໝົດ 917 ສະຖານີ; ເບີໂທລະສັບມືຖືທີ່ເປີດນຳໃຊ້ຕົວຈິງ ໄດ້ທັງໝົດ: 282,020 ເລກໝາຍ; ທຽບໃສ່ເບີທີ່ສາຂາບໍລິສັດຂາຍອອກມາຮອດປີ 2021 ມີເລກໝາຍໂທລະສັບຫຼຸດລົງ 86,908 ເລກໝາຍ ສາເຫດຍ້ອນປະຈຸບັນລັດຖະບານໄດ້ອອກລະບຽບ ແລະ ມາດຕະການໃນການເປີດນຳໃຊ້ ເລກໝາຍໂທລະສັບ ໂດຍໃຫ້ມີການຂຶ້ນທະບຽນເລກໝາຍໂທລະສັບ ເພື່ອຢັ້ງຢືນຕົວຕົນບຸກຄົນທີ່ນຳໃຊ້ເຊິ່ງຕ່າງ ຈາກໃນເມື່ອກ່ອນ ປີ 2021 ຄືນຫຼັງແມ່ນບໍ່ໄດ້ມີການຂຶ້ນທະບຽນເລກໝາຍໂທລະສັບ ຈຶ່ງໄດ້ຈັດນັບຈຳນວນຈາກ ເບີທີ່ຂາຍອອກ ບໍ່ແມ່ນການຈັດນັບຈາກເບີທີ່ນຳໃຊ້ຕົວຈິງ; ຂະຫຍາຍເບີໂທລະສັບຕັ້ງໂຕະບໍ່ມີສາຍ (030) ມາ ຮອດປະຈຸບັນມີ ທັງໝົດ: 31,149 ເລກໝາຍ; ຂະຫຍາຍເບີຕັ້ງໂຕະແບບມີສາຍ(074) ປະຈຸບັນມີ ທັງໝົດ: 429 ເລກໝາຍ; ຂະຫຍາຍອິນເຕີເນັດ (User) ໄດ້ທັງໝົດ 9,932 User, ມາຮອດປະຈຸບັນມີ ອິນເຕີເນັດ (User) ທັງ ໝົດ 13,624 User; ມາຮອດປະຈຸບັນ ມີບ້ານທີ່ມີສັນຍານ ໂທລະສັບມືຖືທັງໝົດ ເຂົ້າເຖິງ ຈຳນວນ 425 ບ້ານ ກວມເອົາ 98,84% ຂອງຈຳນວນບ້ານທັງໝົດ, ບ້ານທີ່ມີສັນຍານອິນເຕີເນັດ ລະບົບ 3G ເຂົ້າເຖິງຈຳນວນ 410 ບ້ານ, ກວມເອົາ 95,34% ຂອງຈຳນວນບ້ານທັງໝົດ; ລະບົບອິນເຕີເນັດ 4G ຈຳນວນ 399 ບ້ານ, ກວມເອົາ

92,79% ຂອງຈຳນວນບ້ານທັງໝົດ; ບ້ານທີ່ຍັງບໍ່ມີສັນຍານອິນເຕີເນັດເຂົ້າເຖິງຈຳນວນ 18 ບ້ານ, ກວມເອົາ 2,38%, ບ້ານທີ່ບໍ່ມີສັນຍານໂທລະສັບເຂົ້າເຖິງ ຈຳນວນ 05 ບ້ານ, ກວມເອົາ 1,16%, ສະເລ່ຍການນຳໃຊ້ເລກໝາຍໂທລະສັບມືຖື ໃສ່ພົນລະເມືອງພາຍໃນແຂວງ 100 ຄົນຕໍ່ 79 ເລກໝາຍ; ຜ່ານການໃຫ້ບໍລິການໃນໄລຍະ 05 ຜ່ານມາບັນດາບໍລິສັດ ໂທລະຄົມມະນາຄົມ 03 ບໍລິສັດ ສາມາດສ້າງລາຍຮັບ ໄດ້ທັງໝົດ: 456,121ລ້ານກີບ, ກຳໄລທັງໝົດ: 226,538 ລ້ານກີບ, ມອບພັນທະເຂົ້າງົບປະມານໄດ້: 88,448 ລ້ານກີບ;

ເພື່ອເຮັດໃຫ້ການຄຸ້ມຄອງການນຳໃຊ້ ເລກໝາຍໂທລະສັບ ໃຫ້ເຂົ້າສູ່ລະບຽບການໄປພ້ອມກັບການແກ້ໄຂດ້ານຫຍໍ້ທໍ້ຈາກການນຳໃຊ້ສື່ສັງຄົມອອນລາຍ ຂະແໜງໄປສະນີ ແລະ ການສື່ສານ ໄດ້ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການສະໜອງຂໍ້ມູນ ກ່ຽວກັບການເຄື່ອນໄຫວເລກໝາຍໂທລະສັບ ແລະ ອິນເຕີເນັດ ທັງໝົດ ຈຳນວນ 61 ສະບັບ, ມີ 93 ເລກໝາຍ; ເກັບມ້ຽນສາຍສົ່ງໂທລະຄົມມະນາຄົມ ຢູ່ເທດສະບານ ເມືອງໄຊຍະບູລີ ຮ່ວມກັບ ສາຂາບໍລິສັດທີ່ໃຫ້ບໍລິການດ້ານໂທລະຄົມ ເພື່ອຄວາມສວຍງາມ ແລະ ປອດໄພ ຈຳນວນ 05 ຈຸດ.

**4. ການພັດທະນາວຽກງານບໍລິຫານລັດ ແລະ ບໍລິການລັດດິຈິຕອນ**

ໃນໄລຍະ 05 ປີຜ່ານມາ ພະແນກໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການປະຕິບັດພາລະບາດສິດໜ້າທີ່ໃນການອອກແຮງ ຈັດຕັ້ງຜັນຂະຫຍາຍເຜີຍແຜ່ເຊື່ອມຊຶມ ນິຕິກຳທີ່ກ່ຽວຂ້ອງກັບ ການຫັນເປັນທັນສະໄໝ, ຫັນເປັນ 03 ເສົາຄ້ຳດິຈິຕອນ: ລັດດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ ຢ່າງຕັ້ງໜ້າ ເພື່ອໃຫ້ສັງຄົມຮັບຮູ້ ແລະ ກ້າວໄປສູ່ການໝູນໃຊ້ເຂົ້າໃນວຽກງານການບໍລິຫານຂອງພາກລັດ, ການຜະລິດ, ການຄ້າ, ການເງິນ, ການບໍລິການຂອງພາກທຸລະກິດ ແລະ ການນຳໃຊ້ ຂອງປະຊາຊົນ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງໃນແຕ່ລະປີໃຫ້ມີການຂະຫຍາຍຕົວ ເຊິ່ງສາມາດສັງລວມໄດ້ບາງດ້ານທີ່ພົ້ນເດັ່ນເປັນຕົ້ນ: ໄດ້ອອກຂໍ້ຕົກລົງທ່ານເຈົ້າແຂວງ ສະບັບເລກທີ 960/ຈຂ.ຊຍ, ລົງວັນທີ 6 ກໍລະກົດ 2023 ແລະ ສະບັບເລກທີ 406/ຈຂ.ຊຍ ລົງວັນທີ 1 ມິຖຸນາ 2024 ວ່າດ້ວຍການແຕ່ງຕັ້ງຄະນະຄຸ້ມຄອງອິນເຕີເນັດ ແລະ ການຫັນເປັນດິຈິຕອນຂັ້ນແຂວງ ໄດ້ລົງເຄື່ອນໄຫວໂຄສະນາເຜີຍແຜ່ກ່ຽວກັບ ແຜນພັດທະນາເສດຖະກິດດິຈິຕອນ ແລະ ຝຶກອົບຮົມດ້ານ ICT ໄດ້ທັງໝົດ 28 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 1,265 ເທື່ອຄົນ, ຍິງ 357 ເທື່ອຄົນ; ສະເໜີຂໍອະນຸມັດສ້າງ User ລະບົບການສື່ສານພາກລັດ (G-chat) ໃຫ້ພະນັກງານ-ລັດຖະກອນ ຂອງບັນດາພະແນກການ, ອົງການອ້ອມຂ້າງແຂວງ ຈຳນວນ 3,771 Users; ຂະຫຍາຍລະບົບເຄືອຂ່າຍພາກລັດ G-Net ໄດ້ 01 ພາກສ່ວນ, ສ້າງເວັບໄຊ G-web platform ໃຫ້ແກ່ບັນດາສຳນັກງານພາກລັດ ໄດ້ທັງໝົດ 05 ເວບໄຊ, ທຽບໃສ່ແຜນການ 5ປີ ປະຕິບັດໄດ້ 33,33% ຂອງແຜນການ, ມີການນຳໃຊ້ລະບົບຫ້ອງການທັນສະໄໝ (E-office V.3) 02 ພາກສ່ວນຄື ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຈຳນວນ 27 Users ແລະ ຫ້ອງວ່າການແຂວງໄຊຍະບູລີ ຈຳນວນ 69 Users; ໄດ້ສົມທົບກັບ ຄະນະໂຄສະນາອົບຮົມແຂວງ ໃນການຕິດຕັ້ງ ແລະ ຄວບຄຸມລະບົບການຖ່າຍທອດສົດ ໄດ້ 03 ຄັ້ງ; ໄດ້ຊຸກຍູ້ສົ່ງເສີມໃຫ້ພະແນການ ແລະ ເມືອງ ນຳໃຊ້ລະບົບກອງປະຊຸມທາງໄກ (Video Conference) ໄດ້ທັງໝົດ 32 ຊຸດ; ສະເໜີສ້າງ ບັນຊີການນຳໃຊ້ລະບົບກອງປະຊຸມທາງໄກ ( True Conference) ໄດ້ 18

Users; ຊ່ວຍຕິດຕັ້ງ ແລະ ຄວບຄຸມລະບົບກອງປະຊຸມທາງໄກ (Video Conference) ໃຫ້ບັນດາພະແນການ, ອົງການ ອ້ອມຂ້າງແຂວງ ໄດ້ຈຳນວນ 48 ຄັ້ງ; ນຳເອົາຂ່າວການເຄື່ອນໄຫວວຽກງານຂົງເຂດເຕັກໂນໂລຊີ ແລະ ການສື່ສານ ແລະ ຂ່າວເດັ່ນຂອງແຂວງ ເຜີຍແຜ່ລົງເວບໄຊຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານ ໄດ້ 133 ຂ່າວ; ຊຸກຍູ້ບັນດາເມືອງຄຸ້ມຄອງ ອອກໃບອະນຸຍາດ ພ້ອມເກັບຄ່າທຳນຽມ ແລະ ຄ່າບໍລິການ ນຳຜູ້ປະກອບການທີ່ດຳເນີນທຸລະກິດດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (ໄອຊີທີ) ໄດ້ຈຳນວນ 518 ຫົວໜ່ວຍ.

ສັງລວມແລ້ວຕະຫຼອດໄລຍະ 05 ປີ ຂອງການຈັດຕັ້ງປະຕິບັດວຽກງານການຫັນເປັນທັນສະໄໝ ແລະ ຫັນເປັນດິຈິຕອນ ແມ່ນດຳເນີນໃນຊ່ວງໄລຍະທີ່ພວກເຮົາທີ່ເກີດມີສະພາບການລະບາດພະຍາດ ໂຄວິດ19 ເຊິ່ງມີທັງກາລະໂອກາດ ແລະ ສິ່ງທ້າທາຍຕໍ່ກັບການພັດທະນາວຽກງານດັ່ງກ່າວເຊິ່ງເຫັນໄດ້ອັນທີ່ເປັນພົ້ນເດັ່ນແມ່ນຫັນປ່ຽນມານຳໃຊ້ ກອງປະຊຸມທາງໄກຜ່ານ ວິດີໂອຄອນເຟີເລັນ ຫຼາຍຂຶ້ນ; ການນຳໃຊ້ສື່ສັງຄົມອອນລາຍ ແລະ ການສົ່ງຂໍ້ມູນເອກະສານດ້ານເອເລັກໂຕນິກ ມີທ່າອ່ຽງທີ່ດີຂຶ້ນເຊິ່ງຈະເປັນພື້ນຖານໃຫ້ແກ່ການຂັບເຄື່ອນການຫັນເປັນ 03 ເສົາຄ້ຳ ດິຈິຕອນ ໃນອານາຄົດ.

5. **ການພັດທະນາວຽກງານ ເຕັກໂນໂລຊີ ແລະ ນະວັດຕະກຳ**

ຄົ້ນຄວ້າກະກຽມເອກະສານຕ່າງໆ ກ່ຽວກັບການລົງສຳຫຼວດ, ເກັບກຳຂໍ້ມູນສະຖິຕິບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ ການຜະລິດ, ການບໍລິການ, ການນຳເຂົ້າ-ຈັດຈຳໜ່າຍ ຜະລິດຕະພັນເຕັກໂນໂລຊີ ແລະ ນະວັດຕະກຳພາຍໃນແຂວງສາມາດສັງລວມໄດ້ຜູ້ປະກອບການນຳເຕັກໂນໂລຊີໃນຂົງເຂດການຜະລິດກະສິກຳ ແລະ ອຸສາຫະກຳມີທັງໝົດ 107 ແຫ່ງ ໃນນັ້ນການນຳໃຊ້ເຕັກໂນໂລຊີລະດັບສູງມີ 07 ແຫ່ງຄື: 1) ໂຮງງານໄຟຟ້າພະລັງງານຄວາມຮ້ອນຫົງສາ, 2) ເຂື່ອນໄຟຟ້ານ້ຳຂອງ ເມືອງໄຊຍະບູລີ, 3) ໂຮງງານອົບສາລີ ເມືອງພຽງ, 4) ໂຮງງານອົບສາລີ ບ້ານຂອນ ເມືອງເງິນ, 5) ໂຮງງານປຸງແຕ່ງຂີ້ເຖົ່າລອຍ ນາຊຳ ເມືອງໄຊຍະບູລີ, 6) ໂຮງງານໂມ້ ແລະ ປັບຄຸນນະພາບຂີ້ເຖົ່າລອຍ ເມືອງຫົງສາ, ແລະ 7) ໂຮງສີເຂົ້າທັນສະໄໝຊຽງປອນ ເມືອງພຽງ ແລະ ນຳໃຊ້ເຕັກໂນໂລຊີລະດັບກາງ 99 ແຫ່ງ; ໄດ້ສ້າງປຶ້ມນຳສະເໜີເພື່ອເຜີຍແຜ່ ພາລະບົດບາດ, ກົດໝາຍ, ນິຕິກຳລຸ່ມກົດໝາຍ ໄດ້ 03 ສະບັບ ແລະ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມຢູ່ຂັ້ນພະແນກ ໄດ້ 01 ຄັ້ງ; ໄດ້ເຂົ້າຮ່ວມສຳມະນາ ແລະ ຝຶກອົບຮົມພາລະບົດບາດ, ຄວາມຮູ້ກ່ຽວກັບເຕັກໂນໂລຊີ ແລະ ນຳວັດຕະກຳ, ການສົ່ງເສີມທຸລະກິດສະຕາດອັບ ແລະ ການຖ່າຍທອດເຕັກໂນໂລຊີ ຢູ່ນະຄອນຫຼວງ; ໄດ້ພົວພັນປະສານງານກັບພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ທົ່ວປະເທດ ແລະ ສົມທົບກັບກົມວິຊາການທີ່ກ່ຽວຂ້ອງເພື່ອຖອດຖອນບົດຮຽນວຽກງານເຕັກໂນໂລຊີ ແລະ ນະວັດຕະກຳ ໃນແຕ່ລະໄລຍະ.

## III. ສະຫຼຸບຕີລາຄາ ດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້

### 1. ດ້ານດີ

1) ຍ້ອນມີ ນິຕິກຳ, ແຜນຍຸດທະສາດ, ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

2) ຍ້ອນໄດ້ຮັບການຊີ້ນໍາ-ນໍາພາ ຢ່າງໃກ້ສິດຈາກອົງການປົກຄອງແຂວງ, ກະຊວງສາຍຕັ້ງ ໃນການປະຕິບັດວຽກງານໃນແຕ່ລະສົກປີເປັນປົກກະຕິ,
3) ຍ້ອນຄະນະນໍາຂອງພະແນກໄດ້ເອົາໃຈໃສ່ ນໍາພາຊີ້ນໍາ ພະນັກງານ-ລັດຖະກອນ ໃນການປະຕິບັດໜ້າທີ່ການເມືອງ ສູ້ຊົນປະຕິບັດຄາດໝາຍດ້ວຍຄວາມຮັບຜິດຊອບສູງ;
4) ບັນດາສາຂາບໍລິສັດຜູ້ໃຫ້ບໍລິການດ້ານ ໄປສະນີ, ໂທລະຄົມມະນາຄົມ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນການພັດທະນາພື້ນຖານໂຄງລ່າງ ພາຍໃນແຂວງໃຫ້ກ້ວາງຂວາງ ສາມາດເຮັດໃຫ້ພາກລັດ, ທຸລະກິດຜູ້ປະກອບການ ແລະ ປະຊາຊົນ ສາມາດນໍາໃຊ້ ແລະ ເຂົ້າເຖິງຢ່າງສະດວກ.

## 2. ດ້ານອ່ອນ ແລະ ຂໍ້ຄົງຄ້າງ

1) ການເຜີຍແຜ່ ນິຕິກໍາ ທີ່ກ່ຽວຂ້ອງກັບການຫັນເປັນທັນສະໄໝ, ຫັນເປັນດິຈິຕອນ ຍັງບໍ່ທັນກວ້າງຂວາງ ຫຼາຍພະແນກການ, ເມືອງ, ປະຊາຊົນຈໍານວນໜຶ່ງ ຍັງບໍ່ທັນໃຫ້ຄວາມສໍາຄັນ ແລະ ໝູນໃຊ້ເຂົ້າໃນການບໍລິຫານ, ການຜະລິດ, ການປຸງແຕ່ງ, ການຄ້າ ແລະ ການບໍລິການ;
2) ຂະບວນການຫັນເປັນທັນສະໄໝ ແລະ ຫັນ 03 ເສົາຄໍ້າດິຈິຕອນ ຍັງມີຄວາມຊັກຊ້າຖ້າທຽບກັບຄວາມຮຽກຮ້ອງຕ້ອງການຂອງຍຸກໂລກາພິວັດ; ການຄຸ້ມຄອງພື້ນຖານໂຄງລ່າງດ້ານໄປສະນີ, ໂທລະຄົມມະນາຄົມ, ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ ແລະ ນະວັດຕະກໍາ ຍັງເຮັດບໍ່ທັນດີເທົ່າທີ່ຄວນ;
3) ພື້ນຖານໂຄງລ່າງດ້ານໄປສະນີ,ໂທລະຄົມມະນາຄົມ ຍັງບໍ່ທັນ ຄອບຄຸມ ແລະ ກວ້າງຂວາງ ໄປສູ່ເຂດຊານເມືອງ, ຊົນນະບົດຫ່າງໄກສອກຫຼີກ;
4) ບຸກຄະລາກອນ ທີ່ມີຄວາມຮູ້ດ້ານ ໄອຊີທີ ນັບທັງພາກລັດ ແລະ ທຸລະກິດຜູ້ປະກອບການມີຈໍານວນຈໍາກັດ ເຮັດໃຫ້ຂະບວນການຫັນເປັນທັນສະໄໝ, ຫັນເປັນດິຈິຕອນ ພົບຄວາມຫຍຸ້ງຍາກ ແລະ ຊັກຊ້າ;
5) ງົບປະມານ ທີ່ສະໜອງໃຫ້ແກ່ການພັດທະນາພື້ນຖານໂຄງລ່າງ, ການຈັດຊື້ອຸປະກອນ ແລະ ການເຄື່ອນໄຫວ ມີຈໍາກັດ ບໍ່ທັນຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ໃນການພັດທະນາ ວຽກງານເຕັກໂນໂລຊີ ແລະ ການສື່ສານ ໃນໄລຍະໃໝ່;

## 3. ບົດຮຽນທີ່ຖອດຖອນໄດ້

1) ຫັນເອົາແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ ອອກເປັນແຜນງານ ແລະ ໂຄງການລະອຽດ ພ້ອມຈັດລຽງບູລິມະສິດ ໃຫ້ສອດຄ່ອງກັບວຽກຈຸດສຸມພັດທະນາ ໃຫ້ສົມຄູ່ກັບງົບປະມານທີ່ມີຈໍາກັດ ແລະ ຮັບປະກັນປະສິດທິຜົນສູງ;
2) ເພີ່ມທະວີຄວາມຮັບຜິດຊອບ ຂອງບັນດາຂະແໜງການ ໃນການຜັນຂະຫຍາຍວຽກງານການຫັນເປັນທັນສະໄໝ ແລະ ຫັນເປັນດິຈິຕອນ ເພື່ອເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ມີຈັງຫວະການຂະຫຍາຍຕົວທີ່ໄວຂຶ້ນ;
3) ບັນດາຜູ້ປະກອບການບໍລິສັດ ສຸມໃສ່ພັດທະນາ, ປັບປຸງ ແລະ ຂະຍາຍພື້ນຖານໂຄງລ່າງ ດ້ານໄປສະນີ, ໂທລະຄົມມະນາຄົມ ໄດ້ກວ້າງຂວາງ ຈະເປັນສິ່ງເອື້ອອໍານວຍ ໃຫ້ພາກລັດ, ທຸລະກິດຜູ້ປະກອບ

ການ ແລະ ປະຊາຊົນ ເຂົ້າເຖິງໄດ້ສະດວກຂຶ້ນ ແລະ ເປັນພື້ນຖານການແກ້ໄຂຄວາມທຸກຍາກແກ່ປະຊາຊົນ;

4) ພະນັກງານໄດ້ເຂົ້າຍົກລະດັບຄວາມຮູ້ດ້ານວິຊາສະເພາະ ແລະ ທິດສະດີການເມືອງການປົກຄອງ ຈະເຮັດໃຫ້ຄວາມຮັບຮູ້ ແລະ ການປະຕິບັດວຽກງານການທັນເປັນທັນສະໄໝ ແລະ ທັນເປັນດິຈິຕອນໄດ້ໄວຂຶ້ນ;

5) ແຕ່ລະພາກສ່ວນມີຄວາມສະດຸ້ງໄວຕໍ່ສະພາບຄວາມກ້າວໜ້າ ທາງດ້ານເຕັກໂນໂລຊີ, ປັບປຸງກົນໄກການປະສານງານ, ປັບປຸງແບບແຜນວິທີການເຮັດວຽກ, ດຳເນີນການແບ່ງຂັ້ນຄຸ້ມຄອງ ວຽກງານເຕັກໂນໂລຊີ ແລະ ການສື່ສານ ຢູ່ ຂັ້ນແຂວງ, ເມືອງ, ຕາແສງ ໃຫ້ລະອຽດຈະແຈ້ງ, ກຳນົດຈຸດສຸມຂອງວຽກງານຢ່າງຖືກຕ້ອງ ແລະ ເໝາະສົມ ເພື່ອຮັບປະກັນປະສິດທິຜົນໃນການຈັດຕັ້ງປະຕິບັດວຽກງານ.

# ພາກທີ II
# ແຜນພັດທະນາວຽກງານເຕັກໂນໂລຊີ ແລະ ການສື່ສານ
# ແຂວງໄຊຍະບູລີ 05 ປີ ( 2026-2030 )

## I. ສະພາບແວດລ້ອມເອື້ອອຳນວຍ ແລະ ສິ່ງທ້າທາຍ

### 1. ສະພາບແວດລ້ອມທີ່ເອື້ອອຳນວຍ

ສະພາບການພັດທະນາ ຂອງ ແຂວງໄຊຍະບູລີ ມີທ່າຂະຫຍາຍຕົວຂຶ້ນຕາມລຳດັບ, ໃນໄລຍະຜ່ານມາ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ການນຳແຂວງ ໄຊຍະບູລີ ໄດ້ສຸມໃສ່ ວຽກງານ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເພື່ອເປັນພື້ນຖານໃນການຫັນເປັນທັນສະໄໝ, ໂດຍເອົາໃຈໃສ່ປັບປຸງໂຄງລ່າງພື້ນຖານເຄືອຂ່າຍອິນເຕີເນັດຄວາມໄວສູງ ດ້ວຍສາຍໄຍແກ້ວນຳແສງ ໃຫ້ສາມາດເຊື່ອມຕໍ່ ກັບ ບັນດາແຂວງ, ບັນດາເມືອງ ແລະ ກັບປະເທດເພື່ອນບ້ານໃກ້ຄຽງ, ປະຈຸບັນໄດ້ຕິດຕັ້ງສາຍໄຍແກ້ວນຳແສງ ຄວບຄຸມທັງ 11 ເມືອງ ໃນທົ່ວ ແຂວງໄຊຍະບູລີ ໄດ້ຕິດຕັ້ງສາຍໄຍແກ້ວນຳແສງ ທັງໝົດ 5,137 ກິໂລແມັດ, ການນຳໃຊ້ໂທລະສັບມືຖື ແລະ ອິນເຕີເນັດ ເປັນຕົວຊີ້ວັດພື້ນຖານການພັດທະນາ ໄອຊີທີ, ສັນຍານໂທລະສັບມືຖື ຄວບຄຸມ 98% ຂອງຈຳນວນບ້ານໃນທົ່ວແຂວງ, ປະຈຸບັນຍັງບໍ່ສາມາດນຳໃຊ້ ໄອຊີທີ ຢ່າງເຕັມສ່ວນເທົ່າທີ່ຄວນໃນການພັດທະນາທາງດ້ານເສດຖະກິດ-ສັງຄົມ, ການນຳໃຊ້ໂຄງລ່າງ ໄອຊີທີ ແລະ ລະບົບໂປຣແກັມ/ແອບພີເຄຊັນ ຍັງຢູ່ໃນລະດັບຕໍ່າ ຢ່າງໃດກໍ່ຕາມ ຖ້າມີການຊຸມໃຊ້ຢ່າງແຜ່ຫຼາຍຈະສາມາດປັບປຸງ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມໄດ້ຢ່າງແນ່ນອນ.

ການປະຕິຮູບທາງດ້ານຂໍ້ມູນຂ່າວສານເພື່ອຫັນເປັນທັນສະໄໝແມ່ນມີຄວາມຈຳເປັນຊ່ວຍໃຫ້ ຜູ້ທີຕັດສິນໃຈສ້າງນະໂຍບາຍໄດ້ຮັບຮູ້ ແລະ ມີການປັບປຸງດ້ານນະໂຍບາຍໃຫ້ສອດຄ່ອງ. ພາກລັດ ແລະ ພາກທຸລະກິດແມ່ນຕ້ອງມີສ່ວນຮ່ວມມືກັນຢ່າງໃກ້ສິດ ເພື່ອບັນລຸເປົ້າໝາຍໃນການພັດທະນາເຄືອຂ່າຍໃຫ້ທົ່ວເຖິງທຸກບ້ານໃນທົ່ວແຂວງ ແລະ ປັບປຸງຍົກລະດັບເຄື່ອຂ່າຍໃຫ້ທົ່ວເຖິງທຸກພາກສ່ວນ, ນອກຈານນີ້ການເຂົ້າເຖິງທາງດ້ານ ເຕັກໂນໂລຊີ ແລະ ການສື່ສານຂໍ້ມູນຂ່າວສານ ຕ້ອງໄປຄວບຄູ່ກັບການພັດທະນາທັກສະ, ໂອກາດ ແລະ ຄວາມສາມາດຕ່າງໆທີ່ສອດຄ່ອງ ແລະ ກ່ຽວຂ້ອງ.

### 2. ສິ່ງທ້າທາຍ

ຄວາມທ້າທາຍຈາກກຳລັງແຮງຂອງເຕັກໂນໂລຊີດິຈິຕອນ ທີ່ມີການພັດທະນາແບບກ້າວກະໂດດຂັ້ນນະໂຍບາຍ ແລະ ລະບຽບການຫຼາຍສະບັບຍັງບໍ່ສາມາດນຳທັນນະວັດຕະກຳທີ່ເກີດຂຶ້ນໃໝ່, ເຕັກໂນໂລຊີ ການສື່ສານໄອຊີທີ ຫຼື ດິຈິຕອນ ມີອິດທິພົນຕໍ່ການດຳລົງຊີວິດຂອງປະຊາຊົນ ລວມເຖິງການດຳເນີນງານ ຂອງ ພາກລັດ - ພາກທຸລະກິດ. ໄອຊີທີ ມີການປ່ຽນແປງຢ່າງວ່ອງໄວຕະຫຼອດເວລາ ແລະ ຢາກຕໍ່ການຄາດເດົາໃນໄລຍະຍາວ ວ່າຈະມີນະວັດຕະກຳ ແລະ ການນຳໃຊ້ຫຍັງເກີດຂຶ້ນໃໝ່.

ການພັດທະນາມີຄວາມແຕກໂຕນຫຼາຍ ລະຫວ່າງ ຕົວເມືອງ ກັບ ຊົນນະບົດ ເຊິ່ງມັນໄດ້ຮຽກຮ້ອງໃຫ້ຕ້ອງສຸມໃສ່ການພັດທະນາຊົນນະບົດ ໂດຍນຳໃຊ້ທ່າແຮງທີ່ມີໂດຍສະເພາະ ແມ່ນການນຳໃຊ້ ໄອຊີທີ ເຂົ້າໃນການພັດທະນາ.

ຄວາມຈຳກັດຂອງການເຂົ້າເຖິງອິນເຕີເນັດ ໃນເຂດຊົນນະບົດຫ່າງໄກສອກຫຼີກ ເປັນບັນຫາທີ່ຕ້ອງໄດ້ເອົາໃຈໃສ່ສູງ ເຊິ່ງຈຳເປັນຕ້ອງມີວິທີການ ແລະ ແນວທາງແກ້ໄຂແບບໃໝ່ທີ່ສອດຄ່ອງກັບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານທີ່ທັນສະໄໝ, ເນື່ອງຈາກວ່າການນຳໃຊ້ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຖ້ານຳໃຊ້ຢ່າງຖືກຕ້ອງ ແລະ ຖືກວິທີສາມາດສ້າງລະດັບການເຊື່ອມຕໍ່ໄປອີກຂັ້ນໜຶ່ງແບບໃໝ່, ເພີ່ມປະສິດທິພາບໃນການຜະລິດ, ຕອບສະ ໜອງຮູບແບບທຸລະກິດ, ການດຳເນີນການຢ່າງມີນະວັດຕະກຳ, ທີ່ສຳຄັນມັນໂປ່ງໃສ ແລະ ສະດວກສະບາຍ.

## II. ຍຸດທະສາດການພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ ໄລຍະ 10 ປີ (2026-2035) ແລະ ວິໄສທັດຮອດປີ 2045.

### I. ວິໄສທັດ ຮອດປີ 2045

**"ຫັນວຽກງານ ເຕັກໂນໂລຊີ ແລະ ການສື່ສານແຂວງ ໃຫ້ກາຍເປັນອຸດສາຫະກຳ ແລະ ທັນສະໄໝ ເປັນເຄື່ອງມືຂັບເຄື່ອນເສດຖະກິດ-ສັງຄົມ ໃຫ້ເຂັ້ມແຂງ ຍືນຍົງ, ເປັນຈຸດເຊື່ອມໂຍງ ກັບ ທ້ອງຖິ່ນ ແລະ ສູນກາງ, ປະຊາຊົນມີສ່ວນຮ່ວມຢ່າງກ້ວາງຂວາງ"**

ຮອດປີ 2045 ໂຄງລ່າງພື້ນຖານດ້ານ ໂທລະຄົມມະນາຄົມ, ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານພາຍໃນແຂວງ ໃຫ້ເປັນລະບົບຄວາມໄວສູງ, ໄດ້ມາດຕະຖານສາກົນ, ສາມາດເຊື່ອມໂຍງທຸກພື້ນທີ່ໃນທົ່ວແຂວງ ແລະ ທົ່ວປະເທດ, ການບໍລິຫານລັດ, ການບໍລິການປະຊາຊົນ ແລະ ທຸລະກິດ ເປັນລະບົບເອເລັກໂຕນິກ ທີ່ທັນສະໄໝຢ່າງກ້ວາງຂວາງ, ບຸກຄະລາກອນ ແລະ ປະຊາຊົນໃນທົ່ວແຂວງ ມີທັກສະດ້ານເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານສູງ, ເປັນກຳລັງແຮງໃນການກ້າວສູ່ສັງຄົມເສດຖະຖະກິດພູມປັນຍາ, ມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ ຍົກລະດັບຊີວິດການເປັນຢູ່ສູງຂຶ້ນ ແລະ ຫັນເອົາການບໍລິການດ້ານໄປສະນີ, ໂທລະຄົມມະນາຄົມ, ໄອຊີທີ ແລະ ສື່ທຸກປະເພດ ໃຫ້ມີຄຸນນະພາບ, ໄດ້ມາດຕະຖານສາກົນ, ມີຄວາມສະດວກ, ວ່ອງໄວ, ປອດໄພ, ຄຸນນະພາບສູງ ແລະ ຄົ້ນຄວ້ານຳໃຊ້ນະວັດຕະກຳ ໃຫ້ມີປະສິດທິພາບ, ໃຫ້ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ຊ່ວຍພັດທະນາຂະແໜງການ ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໄດ້ຢ່າງໝັ້ນຄົງ ແລະ ຍືນຍົງ.

### II. ຍຸດທະສາດ ຮອດປີ 2035

ຍຸດທະສາດການພັດທະນາໄລຍະ 10 ປີ ( 2026-2035) ແມ່ນຍຸດທະສາດບຸກທະລຸເພື່ອນຳພາວຽກງານເຕັກໂນໂລຊີ ແລະ ການສື່ສານແຂວງ ກາຍເປັນອຸດສາຫະກຳ ແລະ ທັນສະໄໝ, ເປັນເຄື່ອງມືສຳຄັນໃນການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ ເປັນຈຸດເຊື່ອມໂຍງ ກັບທ້ອງຖິ່ນ ແລະ ສູນກາງ ປະກອບມີ 04 ຍຸດທະສາດ ດັ່ງນີ້:

1.1. **ຍຸດທະສາດການພັດທະນາບຸກຄະລາກອນ:** ສ້າງບຸກຄະລາກອນຂອງແຂວງໃຫ້ມີຄວາມຮູ້, ຄວາມສາມາດສູງໃນການຄຸ້ມຄອງ, ເຕັກນິກຄວາມປອດໄພ ແລະ ນຳໃຊ້ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ທາງດ້ານດິຈິຕອນໃຫ້ພຽງພໍກັບຄວາມຮຽກຮ້ອງຕ້ອງການ ແລະ ເປັນທີ່ຍອມຮັບໃນສັງຄົມ.

1.2. **ຍຸດທະສາດການພັດທະນາລະບົບບໍລິຫານລັດ ແລະ ການບໍລິການແບບດິຈິຕອນ:** ໃຫ້ເປັນເຄື່ອງມືແກ່ບັນ ດາຫ້ອງການພາກລັດ ຢູ່ບັນດາພະແນກການອ້ອມຂ້າງແຂວງ, ເມືອງ ແລະ ຕາແສງ ໃນການຍົກລະດັບໃນການບໍລິຫານ ແລະ ບໍລິການ ເປັນເອເລັກໂຕນິກ ແລະ ອັດຕະໂນມັດເທື່ອລະກ້າວ.

1.3. **ຍຸດທະສາດການພັດທະນາໄປສະນີ ແລະ ພື້ນຖານໂຄງລ່າງ ໂທລະຄົມມະນາຄົມ:** ໄປສະນີໃຫ້ເປັນລະບົບການບໍລິການແບບເອເລັກໂຕນິກ ແລະ ທັນສະໄໝ ເພື່ອໃຫ້ບໍລິການຢ່າງທົ່ວເຖິງດ້ວຍຄຸນນະພາບສູງ; ສ້າງພື້ນຖານໂຄງລ່າງດິຈິຕອນທີ່ສຳຄັນ ເປັນຕົ້ນແມ່ນ ສູນການຮຽນຮູ້ໄອຊີທີ, ລະບົບຫ້ອງການທັນສະໄໝ, ລະບົບໂທລະຄົມມະນາຄົມຄວາມໄວສູງແບບມີສາຍ ແລະ ບໍ່ມີສາຍ, ມີຄວາມທັນສະ ໄໝ, ຄຸນນະພາບສູງ, ໝັ້ນຄົງ, ປອດໄພ, ທົ່ວເຖິງ ສາມາດເຊື່ອມໂຍງທຸກພື້ນທີ່ໃນທົ່ວແຂວງ.

1.4. **ຍຸດທະສາດການສ້າງນະວັດຕະກຳ ໄອຊີທີ:** ສົ່ງເສີມການຄົ້ນຄວ້າ ແລະ ການພັດທະນາຜະລິດ ຕະພັນ ໄອຊີທີໃຫ້ມີສິ່ງໃໝ່ເກີດຂຶ້ນ, ສົ່ງເສີມສັງຄົມ ໃຫ້ນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນທຸກຂະແໜງ ການ ແລະ ທົ່ວສັງຄົມ ເພື່ອສ້າງເສດຖະກິດໃໝ່, ແຫຼ່ງລາຍຮັບໃໝ່, ປັບປຸງຊີວິດການເປັນຢູ່ ແລະ ເພື່ອຫຼຸດຜ່ອນຄວາມທຸກຍາກ.

## III. ແຜນພັດທະນາ ວຽກງານເຕັກໂນໂລຊີ ແລະ ການສື່ສານ 05ປີ (2026-2030).

### 1. ທິດທາງ, ໜ້າທີ່ລວມ

ສືບຕໍ່ຜັນຂະຫຍາຍແນວທາງຂອງພັກ ແລະ ແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ເວົ້າລວມ, ເວົ້າສະເພາະ ແມ່ນແຜນພັດທະນາຂະແໜງ ເຕັກໂນໂລຊີ ແລະ ການສື່ສານ 05 ປີ (2026-2030) ເຂົ້າສູ່ຕົວຈິງພາຍໃຕ້ຄຳຂວັນ "**ການພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ກາຍເປັນອຸດສາຫະກຳທີ່ທັນສະໄໝ, ມີພື້ນຖານໂຄງລ່າງທົ່ວເຖິງ, ມີລະບົບຄວາມໄວສູງ, ປອດໄພ ແລະ ມີຄຸນນະພາບ ຊ່ວຍຂັບເຄື່ອນການພັດທະນາເສດຖະກິດ - ສັງຄົມ ຂອງແຂວງໃຫ້ເຂັ້ມແຂງ ແລະ ຍືນຍົງ** " ສົ່ງເສີມ ແລະ ພັດທະນາການຄຸ້ມຄອງລັດດ້ວຍລະບົບດິຈິຕອນ, ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ຈະໄດ້ອອກແຮງປະຕິບັດ 07 ທິດທາງລວມດັ່ງນີ້:

**ໜຶ່ງ:** ສ້າງ ແລະ ຍົກລະດັບບຸກຄະລາກອນ ໃຫ້ມີຄວາມໜັກແໜ້ນ ທາງດ້ານການເມືອງ-ແນວຄິດ ສຶກສາອົບຮົມໃຫ້ ພະນັກງານ-ລັດຖະກອນ ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ມີສະຕິລະວັງຕົວຕໍ່ກົນອຸບາຍມ້າງເພຂອງອິດທິກຳລັງປໍລະປັກ, ກວດກາການປະຕິບັດໜ້າທີ່ຢ່າງໃກ້ຊິດ, ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆຢ່າງທັນການ ປະສານສົມທົບ, ຫັດແໜ້ນສາຍພົວພັນອົງການຈັດຕັ້ງ, ວຽກ ປກສ, ປກຊ ຕາມລະບຽບການ, ຮັບປະກັນຄວາມສາມັກຄີ, ຄວາມປອດໄພຂອງສຳນັກງານອົງການຊັບສິນຂອງສ່ວນລວມ ແລະ ບຸກຄົນ;

**ສອງ:** ຍົກລະດັບພະນັກງານວິຊາການດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ເຂົ້າໃນວຽກງານວິຊາສະເພາະ ຢ່າງມີຄຸນນະພາບ ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຂະແໜງການ, ໃຫ້ມີຄວາມຮູ້ພື້ນຖານທັນກັບຍຸກສະໄໝ ( ICT );

**ສາມ:** ພັດທະນາ ແລະ ສົ່ງເສີມໃຫ້ພະນັກງານພາກລັດ, ພາກທຸລະກິດ ແລະ ປະຊາຊົນຮູ້ນໍາໃຊ້ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ, ນໍາໃຊ້ເຄື່ອງມືທີ່ທັນສະໄໝໃນການຄຸ້ມຄອງບໍລິຫານລັດ, ການຜະລິດ, ການຄ້າ, ການເງິນ ແລະ ການບໍລິການ ຮັບປະກັນໃຫ້ວຽກງານມີຄວາມສະດວກວ່ອງໄວ, ປອດໄພ, ມີສະຖຽນລະພາບ,ໂປ່ງໃສ ແລະ ຮັບປະກັນມີຄວາມສະຫງົບ;

**ສີ່:** ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃນການພັດທະນາການບໍລິການໄປສະນີ ທັນເປັນແບບເອເລັກໂຕຼນິກ, ໂລຈິດສະຕິກ, ການເງິນໄປສະນີ ແລະ ການບໍລິການຕ່າງໆ ໃຫ້ທັນສະໄໝໄດ້ມາດຕະຖານ, ສະດວກ, ວ່ອງໄວ, ປອດໄພ ແລະ ມີຄຸນນະພາບສູງ, ສ້າງເຄືອຂ່າຍໄປສະນີ ໃຫ້ກວ້າງຂວາງຮັບປະກັນປະຊາຊົນບັນດາເຜົ່າທັງຕົວເມືອງຕະຫຼອດຮອດພື້ນຖານເຂດຫ່າງໄກສອກຫຼີກ ໃຫ້ສາມາດເຂົ້າເຖິງໄດ້ສະດວກ;

**ຫ້າ:** ສົ່ງເສີມ, ສ້າງເງື່ອນໄຂໃນການພັດທະນາເຄືອຄ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດຄວາມໄວສູງ ແບບມີສາຍ ແລະ ບໍ່ມີສາຍ ລົງສູ່ບັນດາເມືອງ, ຕາແສງ ແລະ ເຂດຫ່າງໄກສອກຫຼີກ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບດີ, ຮັບປະກັນການບໍລິການ ແລະ ເປັນທໍາ ເຮັດໃຫ້ທຸກຄົນສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້ຢ່າງສະດວກວ່ອງໄວ;

**ຫົກ:** ປົກປັກຮັກສາ ພື້ນຖານໂຄງລ່າງທາງດ້ານໂທລະຄົມມະນາຄົມ ໃຫ້ຮັບປະກັນຄວາມປອດໄພ ເພື່ອສະກັດກັ້ນການທໍາລາຍອຸປະກອນເຄືອຂ່າຍ, ສິ່ງປຸກສ້າງ, ປົກປ້ອງສິດຜົນປະໂຫຍດຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ; ຕ້ານ ແລະ ສະກັດກັ້ນ ອາຊະຍາກໍາທາງລະບົບຄອມພິວເຕີ ແລະ ການໂຈນລະກໍາຂໍ້ມູນຂ່າວສານທຸກຮູບແບບ;

**ເຈັດ:** ສະໜັບສະໜູນໃຫ້ມີການຄົ້ນຄິດປະດິດສ້າງເຕັກໂນໂລຊີດີຈີຕອນ ແລະ ນໍາໃຊ້ນະວັດຕະກໍາໃໝ່ທີ່ເປັນປະໂຫຍດຕໍ່ການພັດທະນາເສດຖະກິດ-ສັງຄົມ.

2. ເປົ້າໝາຍ, ຄາດໝາຍ ແລະ ແຜນງານຈຸດສຸມ

**ເປົ້າໝາຍທີ I: ພັດທະນາບຸກຄະລະກອນ ທັງພາກລັດ ແລະ ເອກະຊົນ ໃຫ້ມີຄວາມຮູ້ ແລະ ຄວາມສາມາດ ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ, ມີຄວາມພ້ອມໃນຂະບວນການຫັນເປັນລັດດີຈີຕອນ ເພື່ອປະກອບສ່ວນພັດທະນາແຂວງຢ່າງມີປະສິດທິພາບ.**

1. **ຄາດໝາຍຕົວຊີ້ວັດ**

1) ສືບຕໍ່ສຶກສາອົບຮົມ ທາງດ້ານການເມືອງ-ແນວຄິດ ຂອງພະນັກງານໃຫ້ມີຄວາມໜັກແໜ້ນ, ຍົກສູງຄວາມເປັນເອກະພາບ ພາຍໃນພະແນກ, ມີຄວາມສາມັກຄີເປັນປຶກແຜ່ນ ແລະ ມີຄວາມສະຫງົບ;
2) ສ້າງພະນັກງານ ນໍາພາ-ຄຸ້ມຄອງ, ຊຸບຊ້ອນພະນັກງານໃຫ້ສົມຄູ່ກັບຄວາມຮູ້ວິຊາສະເພາະ ໃນການພັດທະນາບຸກຄະລາກອນ, ຂຽນກໍານົດຕໍາແໜ່ງງານເພີ່ມຕໍາແໜ່ງຮອງຂະແໜງຢູ່ພາຍໃນພະແນກໃຫ້ໄດ້ 02 ຕໍາແໜ່ງຂຶ້ນໄປ;
3) ສ້າງບຸກຄະລາກອນຢູ່ບັນດາພະແນກການ ແລະ ບັນດາເມືອງ ໃຫ້ມີຄວາມຮູ້ຄວາມສາມາດດ້ານ ICT ໃຫ້ໄດ້: 250 ຄົນຂຶ້ນໄປ ໂດຍຜ່ານການຈັດຝຶກອົບຮົມ ໃຫ້ບັນລຸ 10 ຊຸດ;
4) ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງ ຫ້ອງການ ຕສ ຂັ້ນເມືອງ ໃນເມືອງທີ່ມີເງື່ອນໄຂ 05 ເມືອງຂຶ້ນໄປ ພ້ອມທັງສືບຕໍ່ແບ່ງຂັ້ນຄຸ້ມ ລະຫວ່າງ ແຂວງ, ເມືອງ ແລະ ຕາແສງ ຄືນໃໝ່.
5) ຊຸກຍູ້ໃຫ້ບັນດາ ພະແນກການອ້ອມຂ້າງແຂວງ ແລະ ເມືອງ ນໍາໃຊ້ລະບົບການສື່ສານຂອງພາກລັດ G-Chat, G-share/G-Drive, ລະບົບຫ້ອງການທັນສະໄໝ (E-Office), ການເຊັນເອກະສານແບບດີຈີຕອນ, ລະບົບລົງຄະແນນສຽງ, ລະບົບສ້າງນາມບັດທັນສະໄໝ (QRv- Card), ລະບົບກະດານຂໍ້ມູນຊຸມຊົນລາວພາກລັດ ( LAO Pedia), ສ້າງລະບົບເວັບໄຊ ຂອງພາກລັດ (G-web platform) ໂດຍຊຸກຍູ້ໃຫ້ 15 ພະແນກການ, ອົງການ, ກົມກອງ ຂັ້ນແຂວງ, 11 ເມືອງ ແລະ ພາກສ່ວນອື່ນໆທີ່ມີເງື່ອນໄຂໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ຂະຫຍາຍເຄືອຂ່າຍ ຂອງພາກລັດ (G-Net) ອອກສູ່ບັນດາພະແນກການອ້ອມຂ້າງແຂວງ, ເມືອງ ແລະ ຕາແສງ ທີ່ມີເງື່ອນໄຂ;
6) ສູ້ຊົນໃຫ້ 06 ມາດຖານ (DMA) ຂອງການຫັນເປັນແຂວງດີຈີຕອນ ຄະແນນສະເລ່ຍໃຫ້ໄດ້ 04 (Digital Maturity Assessment).

2. **ແຜນງານຈຸດສຸມ**

**ວຽກຈຸດສຸມທີ 1 : ພັດທະນາບຸກຄະລາກອນ, ປັບປຸງກົງຈັກການຈັດຕັ້ງ ແລະ ແບ່ງຂັ້ນຄຸ້ມຄອງ.**

1) ປັບປຸງການວາງແຜນບຸກຄະລາກອນ ແລະ ແຜນສະເໜີສ້າງຕັ້ງຫ້ອງການເຕັກໂນໂລຊີ ແລະ ການສື່ສານ ປະຈໍາເມືອງທີ່ມີເງື່ອນໄຂ.
2) ຄົ້ນຄວ້າ ແລະ ສ້າງແຜນຝຶກອົບຮົມ-ກໍ່ສ້າງ ພະນັກງານລັດຖະກອນພາຍໃນພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ.

3) ສ້າງບຸກຄະລາກອນດ້ານເຕັກນິກວິຊາສະເພາະເພື່ອຮອງຮັບໜ້າວຽກທີ່ກ່ຽວການສ້າງຄວາມເຂັ້ມແຂງດ້ານໄອຊີທີພາຍໃນແຂວງ.
4) ສົ່ງເສີມ ແລະ ພັດທະນາບຸກຄະລາກອນ ໃຫ້ມີຄວາມສາມາດທາງດ້ານວຽກງານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ.
5) ລົງເຄື່ອນໄຫວໂຄສະນາເຜີຍແຜ່ຍຸດທະສາດ, ແຜນພັດທະນາເສດຖະກິດດິຈິຕອນ ແລະ ສະຕິຕໍ່ການບໍ່ຖືກຫຼອກລວງຜ່ານທາງອອນລາຍ, ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ແລະ ຈັດຝຶກອົບຮົມການສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການຄຸ້ມຄອງອິນເຕີເນັດຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ໄດ້ 1-2 ຄັ້ງ/ປີ;
6) ຊຸກຍູ້ ສົ່ງເສີມໃຫ້ບັນດາຂະແໜງການຂອງພາກລັດ ຫັນມາຊົມໃຊ້ເຄື່ອງມືໄອຊີທີ ເຂົ້າໃນວຽກງານ ໃຫ້ກວ້າງຂວາງ ເພື່ອຫັນເປັນລະບົບບໍລິຫານລັດດິຈິຕອນ ເທື່ອລະກ້າວ, ໂດຍການຈັດຝຶກອົບການສ້າງຄວາມເຂັ້ມແຂງດ້ານວຽກງານໄອຊີທີ ໃຫ້ພະນັກງານວິຊາການໄອທີ ພາຍໃນແຂວງໄຊຍະບູລີ ໃຫ້ໄດ້ ຈຳນວນ 10 ຊຸດຂຶ້ນໄປ;

**ວຽກຈຸດສຸມທີ 2 : ພັດທະນາ ແລະ ສົ່ງເສີມລະບົບການບໍລິຫານລັດດິຈິຕອນໃຫ້ແຂງແຮງ ແລະ ກວ້າງຂວາງ.**

1) ຂະຫຍາຍເຄືອຂ່າຍ ແລະ ເຊື່ອມຕໍ່ລະບົບເຄືອຂ່າຍຂອງພາກລັດ (G-Net) ພາຍໃນແຂວງໄຊຍະບູລີ ໃຫ້ເປັນເສັ້ນທາງໃນການຮັບ-ສົ່ງ ຂໍ້ມູນຂ່າວສານຕ່າງໆ ລະຫວ່າງ ພະແນກການດ້ວຍກັນໃຫ້ມີຄວາມສະດວກ, ວ່ອງໄວ, ຮັບປະກັນຄວາມປອດໄພ ແລະ ຮອງຮັບການຫັນເປັນດິຈິຕອນ ໂດຍສຸມໃສ່ສ້າງລະບົບເຄືອຂ່າຍລິ້ງຖານຂໍ້ມູນສະຖິຕິ 05 ປີ (2026-2030) ຂອງພະແນກການເງິນ ຮ່ວມກັບບັນດາພະແນກການທີ່ມີຄວາມຮັບຜິດຊອບໃນການສະຫຼຸບເປົ້າໝາຍ, ຄາດໝາຍ ແລະ ຕົວຊີ້ວັດໃນແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ, ກາງສະໄໝ ແລະ ດຳເນີນການສະຫຼຸບທ້າຍສະໄໝ 05 ປີ ໃຫ້ມີຄວາມວ່ອງໄວ, ທັນກັບສະພາບການ.
2) ຊຸກຍູ້ບັນດາພະແນກການທີ່ນອນໃນຄະນະກຳມະການປົກຄອງແຂວງ 14 ພະແນກການ, 02 ຫ້ອງການທຽບເທົ່າ ຫັນເປັນລະບົບຫ້ອງການທັນສະໄໝ (E-Office) ດ້ວຍມີການຈັດເກັບເອກະສານເຂົ້າ-ອອກ ທີ່ເຊື່ອມໂຍງກັນ, ລວມທັງການມອບໝາຍວຽກ ຂອງຫົວໜ້າພະແນກ, ຫົວໜ້າຂະແໜງ, ວິຊາການ ທີ່ສາມາມາດຕິດຕາມເອກະສານໃນແຕ່ລະຂັ້ນຕອນ ຂອງພະນັກງານພາຍໃນຫ້ອງການ, ມີຕາຕາລາງເຄື່ອນໄຫວວຽກປະຈຳອາທິດ, ປະຈຳເດືອນ, ມີໂຄງການແຜນເຄື່ອນໄຫວປະຈຳປີ.
3) ສົ່ງເສີມການນຳໃຊ້ລະບົບກອງປະຊຸມທາງໄກ (video conference), ຄວບຄູ່ກັບການນຳໃຊ້ໂປຼແກຼມກອງປະຊຸມທາງໄກຂອງພາກລັດ (True Conference) ໃຫ້ກວ້າງຂວາງ ແລະ ມີປະສິດທິພາບດີຂຶ້ນ ຮ່ວມກັບເມືອງ ແລະ ຕາແສງ
4) ຊຸກຍູ້ໃຫ້ບັນດາ ພະແນກ, ອົງການ, ກົມກອງອ້ອມຂ້າງແຂວງ ແລະ 11 ເມືອງ ໄດ້ນຳໃຊ້ລະບົບການສື່ສານຂອງພາກລັດ (G-Chat), ການຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກ

ລັດ G-share/G-Drive, ການເຊັນເອກະສານແບບດິຈິຕອນ, ລະບົບລົງຄະແນນສຽງ, ລະບົບສ້າງນາມບັດທັນສະໄໝ (QRv- Card), ລະບົບກະດານຂໍ້ມູນຊຸມຊົນລາວພາກລັດ ( LAO Pedia).

5) ຊຸກຍູ້ສົ່ງເສີມໃຫ້ບັນດາພະແນກການ, ອົງການ ອ້ອມຂ້າງແຂວງ ແລະ ບັນດາເມືອງທີ່ມີເງື່ອນໄຂເປີດນຳໃຊ້ລະບົບເວັບໄຊ ຂອງພາກລັດ (G-web platform) ສູ່ຊົນໃຫ້ໄດ້ 15 ເວັບໄຊ, ເພື່ອຄວາມສະດວກ, ວ່ອງໄວ, ປອດໄພ ແລະ ປະຊາຊົນສາມາດເຂົ້າເຖິງຂໍ້ມູນພາກລັດໄດ້ງ່າຍ;(ເນັ້ນໃສ່ພະແນກ ຕສ ແຂວງ, ພະແນກການເງິນ, ພະແນກການອື່ນໆ)
6) ສຸມໃສ່ໃນການຕິດຕາມ, ກວດກາ ປະເມີນຜົນການຈັດຕັ້ງປະຕິບັດ ການຫັນເປັນດິຈິຕອນ ຢູ່ພາຍໃນແຂວງ ແລະ ສະຫຼຸບຖອດຖອນບົດຮຽນ; ຄົ້ນຄວ້າສະໜອງອຸປະກອນໄອຊີທີ ທີ່ຈຳເປັນພື້ນຖານໃຫ້ແກ່ບັນດາພະແນກການ, ອົງການ ແລະ ບັນດາເມືອງຕາມຄວາມອາດສາມາດຕົວຈິງ.
7) ຄົ້ນຄວ້າປັບປຸງເວບໄຊ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ພ້ອມທັງນຳເອົາຂ່າວສານດ້ານໄອຊີທີ ແລະ ຂ່າວເດັ່ນຂອງແຂວງ ລົງເຜີຍແຜ່ໃຫ້ໄດ້ ຈຳນວນ 900 ຂ່າວຂຶ້ນໄປ;
8) ຄຸ້ມຄອງ, ຕິດຕາມ ກວດກາ ການອອກ-ຕໍ່ໃບອະນຸຍາດ ດ້ານເຕັກໂນໂລຊີການສື່ສານ-ຂໍ້ມູນຂ່າວສານ (ໄອຊີທີ) ເຂົ້າໃນລະບົບອອກອະນຸຍາດແບບອອນລາຍ (Digital Bussines Lisence) ໃຫ້ຖືກຕ້ອງຕາມລະບຽບການ.

**ແຜນວຽກຈຸດສຸມທີ 3: ພົວພັນຮ່ວມມື ແລກປ່ຽນບົດຮຽນ ກັບບັນດາແຂວງ ພາຍໃນ ແລະ ຕ່າງປະເທດ**

1)ຍາດແຍ່ງແຫຼ່ງທຶນເພື່ອໄປຖອດຖອນບົດຮຽນນຳກະຊວງ ແລະ ກັບບັນດາແຂວງຢູ່ພາຍໃນ ປະເທດໃຫ້ໄດ້ 2ຄັ້ງຂຶ້ນໄປ.

2)ພົວພັນຮ່ວມມືແລກປ່ຽນບົດຮຽນດ້ານວິຊາການ ແລະ ການຊ່ວຍເຫຼືອ ຈາກ ແຂວງເຊີນລ່າ ແລະ ແຂວງອື່ນໆ ສສ ຫວຽດນາມ ຕາມເງື່ອນໄຂຕົວຈິງ.

**ເປົ້າໝາຍທີ II : ການຫັນເປັນເສດຖະກິດດິຈິຕອນ ເພື່ອຍູ້ແຮງການພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວໄວ ໃນຍຸກ 4.0.**

**1. ຄາດໝາຍຕົວຊີ້ວັດ**

1) ຊຸກຍູ້ການບໍລິຫານ ແລະ ບໍລິການຂອງພາກລັດ ໃຫ້ເປັນການບໍລິການເອກະສານແບບອອນລາຍໃນແຕ່ລະພະແນກການໃຫ້ໄດ້ 50% ຂອງຈຳນວນພະແນກການ ທັງໝົດ; ຂັ້ນເມືອງແມ່ນຊຸກຍູ້ບາງຫ້ອງການເປົ້າໝາຍທີ່ມີທ່າແຮງ.
2) ຊຸກຍູ້ ບໍລິສັດໄປສະນີລາວຈຳກັດ ສາຂາແຂວງໄຊຍະບູລີ ແລະ ບໍລິສັດໄປສະນີເອກະຊົນ (ຮັບ-ຝາກພັດສະດຸ) ຂະຫຍາຍການບໍລິການ ລົງສູ່ເມືອງ ແລະ ເຂດຊຸມຊົນ ທີ່ຍັງບໍ່ທັນມີການບໍລິການເພື່ອໃຫ້ປະຊາຊົນເຂົ້າເຖິງການໃຊ້ການບໍລິການດ້ານໄປສະນີຢ່າງທົ່ວເຖິງ ເມື່ອຮອດປີ 2030 ໃຫ້ມີປ່ອງບໍລິການດ້ານໄປສະນີ ກວມເອົາ 35 ຕາແສງຂຶ້ນໄປ ແລະ ບັນດາຕາແສງສາມາດໃຫ້ບໍລິການດ້ານເອກະສານຜ່ານລະບົບ Online ໃນເຂດຕາແສງເທດສະບານເມືອງ ໃຫ້ກວມ 100%;

ສົມທົບພາກສ່ວນທີ່ກ່ຽວຂ້ອງຊຸກຍູ້ ແລະ ພັດທະນາ ລະບົບໂລຈິສຕິກ ຢູ່ດ່ານ 4ສາກົນ ຂອງ ແຂວງ ໃຫ້ບັນລຸຕາມຄາດໝາຍ

3) ຂະຫຍາຍ ອິນເຕີເນັດຄວາມໄວສູງ ແບບມີສາຍ ( FTTH ) ໃຫ້ໄດ້ 8,685 User ແລະ ລະບົບ 5G ໄປສູ່ບ້ານເທດສະບານເມືອງ 11 ເມືອງ ໃຫ້ໄດ້ 100% ໃນທົ່ວແຂວງ ເພື່ອໃຫ້ປະຊາຊົນເຂົ້າເຖິງ ແລະ ນຳໃຊ້ຢ່າງສະດວກ, ວ່ອງໄວ, ມີຄຸນນະພາບ ແລະ ຮັບປະກັນດ້ານວຽກງານ ປກສ-ປກຊ;

4) ຊຸກຍູ້ສາຂາບໍລິສັດ ຂະຫຍາຍສາຍກາບໄຍແກ້ວນຳແສງ (Optical Fiber Cable) ໃຫ້ໄດ້ທັງໝົດ 200 ກິໂລແມັດຂຶ້ນໄປ, ຂະຫຍາຍສັນຍານໂທລະສັບມືຖືລະບົບ 2G, 3G ກວມເອົາ 100%, 4G ກວມເອົາ 90% ແລະ 5G ໃຫ້ໄດ້ບັນດາບ້ານເທດສະບານ 11 ເມືອງ, ມີຄຸນນະພາບ, ປະສິດຕິພາບ ແລະ ປະຫຍັດຕົ້ນທຶນ, ຂະຫຍາຍໂຄງລ່າງພື້ນຖານຕາໜ່າງໂທລະຄົມ ບ້ານທີ່ບໍ່ມີສັນຍານ ຈຳນວນ 05 ບ້ານ, ແລະ ບ້ານບໍ່ມີສັນຍານອິນເຕີເນັດ ຈຳນວນ 18 ບ້ານ; ສະເລ່ຍເລກໝາຍໂທລະສັບ ໃສ່ພົນລະເມືອງທົ່ວແຂວງໃຫ້ໄດ້ 90 ເລກໝາຍ/100ຄົນ;

5) ຕິດຕາມ, ກວດກາການຂຶ້ນທະບຽນເລກໝາຍໂທລະສັບພາຍໃນແຂວງ ໃຫ້ເຂົ້າລະບົບ 100%;

6) ສູ້ຊົນສ້າງລາຍຮັບ ດ້ານໄປສະນີ ແລະ ໂທລະຄົມມະນາຄົມໃຫ້ໄດ້ 1,500 ຕື້ຂຶ້ນໄປ; ເມື່ອຮອດປີ 2030 ສ້າງລາຍຮັບດ້ານໄປສະນີ ແລະ ໂທລະຄົມມະນາຄົມ ໃຫ້ກວມເອົາ 5% ຂອງ GDP;

**2. ແຜນງານຈຸດສຸມ**

**ວຽກຈຸດສຸມທີ 1 : ພັດທະນາວຽກງານ ໄປສະນີ**

1) ເຜີຍແຜ່ສິດ, ພາລະບົດບາດ, ກົດໝາຍ, ດຳລັດ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບວຽກງານໄປສະນີ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍສິ່ງເກືອດຫ້າມ, ການດຳເນີນທຸລະກິດໄປສະນີ ແລະ ມາດຕະຖານສະຖານ ທີ່ບໍລິການ, ຄຸນນະພາບການບໍລິການໄປສະນີ ໃຫ້ໄດ້ 2 ຄັ້ງ ຂຶ້ນໄປ;

2) ສົ່ງເສີມສັງຄົມນຳໃຊ້ການບໍລິການດ້ານໄປສະນີ ຢ່າງກ້ວາງຂວາງ ເປັນຕົ້ນ: ການບໍລິການພື້ນຖານ ແລະ ມາດ ຕະຖານສູງ;

3) ສົ່ງເສີມໃຫ້ມີການນຳໃຊ້ເຄື່ອງມືທັນສະໄໝ ເຂົ້າໃນການບໍລິການໄປສະນີ, ການຕິດຕາມເຄື່ອງຝາກຜ່ານລະບົບໂປຣແກັມແອັບພິເຄຊັນຕ່າງໆ ໃຫ້ມີຄວາມສະດວກ ແລະ ມີຜົນກຳໄລ;

4) ຊຸກຍູ້ກຸ່ມບໍລິສັດໂຊກໄຊ ພັດທະນາພື້ນຖານໂຄງລ່າງລະບົບໂລຈິສຕິກ ຢູ່ 4 ດ່ານສາກົນ ຂອງ ແຂວງ ໃຫ້ໄດ້ຮັບການພັດທະນາ ເຊັ່ນ : ດ່ານສາກົນປາງມອນ ເມືອງຄອບ, ດ່ານສາກົນນ້ຳເງິນ ເມືອງເງິນ, ດ່ານສາກົນພູດູ່ ເມືອງປາກລາຍ ແລະ ດ້ານສາກົນນ້ຳເຫືອງ ເມືອງແກ່ນທ້າວ.

5) ສ້າງຄວາມ ເຂັ້ມແຂງ ດ້ານວຽກງານໄປສະນີ ໃຫ້ ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານເມືອງ, ຜູ້ເຮັດວຽກປະສານງານປະຈຳເມືອງ ໃນການຄຸ້ມຄອງວຽກງານ ໃຫ້ມີຜົນສຳເລັດ.

6) ສືບຕໍ່ຊຸກຍູ້ ບໍລິສັດໄປສະນີລາວ ສາຂາແຂວງໄຊຍະບູລີ ແລະ ບໍລິສັດຮັບຝາກ-ຈັດສົ່ງເອກະຊົນ; ຂະຫຍາຍຕາໜ່າງໄປສະນີ, ຫ້ອງການບໍລິການ ປະຈຳເມືອງ, ສາຂາ, ຈ່ານ ແລະ ຮູບແບບແຟຣນ

ຊາຍ ຂອງບໍລິສັດຮັບຝາກ-ຈັດສົ່ງ ເອກະຊົນ ລົງສູ່ເມືອງ ແລະ ຕາແສງ ທີ່ຍັງບໍ່ທັນມີ, ເຂດຊຸມຊົນ ເພື່ອໃຫ້ ປະຊາຊົນເຂົ້າເຖິງການໃຊ້ການບໍລິການ ໄປສະນີຫຼາຍຂຶ້ນ;

7) ຕິດຕາມ, ຄຸ້ມຄອງບັນດາຫົວໜ່ວຍທຸລະກິດທີ່ໃຫ້ບໍລິການໄປສະນີ ໃຫ້ເຄື່ອນໄຫວຖືກຕ້ອງ, ສອດຄ່ອງ ແລະ ເກັບຄ່າທຳນຽມ-ຄ່າບໍລິການ, ໄດ້ຮັບການຄຸ້ມຄອງອອກໃບອະນຸຍາດ ຕາມລະບຽບກົດໝາຍ;

8) ຕິດຕາມ, ກວດກາ ມາດຖານສະຖານທີ່ປ່ອງບໍລິການດ້ານໄປສະນີ, ພ້ອມທັງອອກໃບຢັ້ງຢືນໃຫ້ສຳເລັດ.

**ວຽກຈຸດສຸມທີ 2 : ພັດທະນາພື້ນຖານໂຄງລ່າງດ້ານໂທລະຄົມມະນາຄົມ**

1) ເຜີຍແຜ່ສິດ, ພາລະບົດບາດ, ກົດໝາຍ, ດຳລັດ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບວຽກງານໂທລະຄົມມະນາຄົມ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດໂທລະຄົມມະນາຄົມ ແລະ ມາດຕະຖານຄຸນນະພາບ ໃຫ້ໄດ້ 2 ຄັ້ງ ຂຶ້ນໄປ;

2) ຊຸກຍູ້ ບັນດາບໍລິສັດ ໂທລະຄົມມະນາຄົມ ຂະຫຍາຍໂຄງລ່າງພື້ນຖານຕາໜ່າງໂທລະຄົມ ບ້ານທີ່ບໍ່ມີສັນຍານ, ຂະຫຍາຍ ອິນເຕີເນັດຄວາມໄວສູງ ແບບມີສາຍ ( FTTH ) ໃຫ້ກວ້າງຂຶ້ນ ແລະ ແບບບໍ່ມີສາຍ 5G ໄປສູ່ເມືອງ ເພື່ອໃຫ້ປະຊາຊົນເຂົ້າເຖິງ ແລະ ນຳໃຊ້ຢ່າງສະດວກ, ວ່ອງໄວ, ມີຄຸນນະພາບ ແລະ ຮັບປະກັນດ້ານວຽກງານ ປກສ -ປກຊ;

3) ຊຸກຍູ້ບັນດາບໍລິສັດໂທລະຄົມໃນການເກັບກູ້ສາຍສົ່ງໃນຕົວເມືອງ, ເຂດຊຸມຊົນຈຸດທີ່ມີຄວາມຍ້ອນຍານ, ຫຍຸ້ງຍາກ, ເກາະກ່າຍຕາມຕົ້ນໄມ້ເພື່ອໃຫ້ເປັນລະບຽບຮຽບຮ້ອຍ, ສວຍງາມ ແລະ ປອດໄພ;

4) ຕິດຕາມ, ກວດກາ, ຄຸ້ມຄອງ ບັນດາຫົວໜ່ວຍທຸລະກິດທີ່ໃຫ້ບໍລິການຫ້າງ-ຮ້ານ, ຈຳໜ່າຍໂທລະຄົມມະນາຄົມ, ເລກໝາຍໂທລະສັບສາຍດ່ວນ 3 ຕົວເລກ, 4 ຕົວເລກ ແລະ ການຕິດຕັ້ງ ເສົາຮັບ-ສົ່ງສັນຍານໂທລະສັບມືຖື ໄດ້ຮັບການຄຸ້ມຄອງອອກໃບອະນຸຍາດ ຕາມລະບຽບກົດໝາຍ ແລະ ເກັບລາຍຮັບ ຄ່າທຳນຽມ-ຄ່າບໍລິການ;

5) ຊຸກຍູ້ ບັນດາບໍລິສັດທີ່ໃຫ້ການບໍລິການດ້ານໂທລະຄົມມະນາຄົມຂະຫຍາຍພື້ນຖານໂຄງລ່າງພື້ນຖານເຂົ້າເຖິງທຸກບ້ານພາຍໃນທົ່ວແຂວງເປັນຕົ້ນ ບ້ານທີ່ບໍ່ມີສັນຍານໂທລະສັບ 05 ບ້ານ (ບ້ານໂພນສີດາ, ບ້ານ ນາຂອນແກ່ນ ເມືອງ ໄຊຍະບູລີ; ບ້ານ ນໍ້າງີມ ເມືອງພຽງ; ບ້ານ ຫ້ວຍງູ, ບ້ານ ວັງພະໜອນ ເມືອງ ປາກລາຍ) ;

6) ຕິດຕາມ ການເຄື່ອນເໜັ່ງຂອງຕະຫຼາດ ແລະ ການແຂ່ງຂັນທາງດ້ານໂທລະຄົມມະນາຄົມ ພາຍໃນແຂວງໃຫ້ຖືກຕ້ອງ, ການແກ້ໄຂຂໍ້ຂັດແຍ່ງຂອງສາຂາບໍລິສັດໂທລະຄົມມະນາຄົມຕ່າງໆ.

7) ສົມທົບກັບ ບັນດາບໍລິສັດ ໂທລະຄົມມະນາຄົມ ໃນການລົງສຳຫຼວດຂໍ້ມູນ ບ້ານທີ່ ບໍ່ມີສັນຍານອິນເຕີເນັດ ເພື່ອຂຽນໂຄງການ ເພື່ອຍາດແຍ່ງທຶນ ຂອງກອງທຶນພັດທະນາໂທລະຄົມ ແລະ ການຫັນເປັນດິຈິຕອນ.

8) ຕິດຕາມ ການລັກລອບນຳໃຊ້ ສັນຍານໂທລະສັບ ແລະ ອິນເຕີເນັດ ຂອງຕ່າງປະເທດ ໃນຂອບເຂດເມືອງທີ່ມີຊາຍແດນຕິດກັບປະເທດໃກ້ຄຽງ;
9) ສ້າງຄວາມເຂັ້ມແຂງ ດ້ານວິຊາການ ໂທລະຄົມມະນາຄົມ ໃຫ້ບັນດາ ຫ້ອງການເຕັກໂນໂລຊີ ແລະ ການສື່ສານເມືອງ, ຜູ້ປະສານງານ ປະຈຳເມືອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານໂທລະຄົມມະຄົມ.

➢ **ວຽກຈຸດສຸມທີ 3 : ຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ**

1) ເຜີຍແຜ່ສິດ, ພາລະບົດບາດ, ກົດໝາຍ, ດຳລັດ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບວຽກງານການຄຸ້ມຄອງຄື້ນຄວາມຖີ່ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການນຳເຂົ້າອຸປະກອນໂທລະຄົມມະນາຄົມ ແລະ ໄອຊີທີ, ຄວາມແຮງຂອງຄື້ນໄຟຟ້າແມ່ເຫຼັກຂອງສະຖານີ ຮັບ-ສົ່ງສັນຍານໂທລະຄົມມະນາຄົມ ໃຫ້ໄດ້ 2 ຄັ້ງ ຂຶ້ນໄປ;
2) ຕິດຕາມ, ກວດກາ, ຄຸ້ມຄອງຫົວໜ່ວຍທຸລະກິດທີ່ມີ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອອອກອະນຸຍາດ ຕາມລະບຽບກົດໝາຍ;
3) ຕິດຕາມ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ການນຳເຂົ້າອຸປະກອນຄື້ນຄວາມຖີ່ ສະເໜີກົມຄື້ນຄວາມຖີ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາອອກໃບອະນຸຍາດ, ຢັ້ງຢືນເຕັກນິກການນຳເຂົ້າ ຕາມການແບ່ງຂັ້ນຄຸ້ມຄອງໃຫ້ຖືກຕ້ອງ;
4) ຕິດຕາມ ການນຳໃຊ້ອຸປະກອນ ເຄື່ອງບິນບໍ່ມີຄົນຂັບ (ໂດຣນ), ປະກອບເອກະສານນຳສະເໜີ ໃຫ້ກົມຄື້ນຄວາມຖີ່ ອອກໃບຢັ້ງຢືນການນຳໃຊ້ຍ່ານຄວາມຖີ່.
5) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຂໍຄວາມຮ່ວມມື ໃນການສະໜອງຂໍ້ມູນການນຳໃຊ້ຄື້ນຄວາມຖີ່, ອຸປະກອນເຄື່ອງບິນບໍ່ມີຄົນຂັບ (ໂດຣນ) ເພື່ອອອກອະນຸຍາດນຳໃຊ້ໃຫ້ຖືກຕ້ອງຕາມລະບຽບການ.

➢ **ວຽກຈຸດສຸມທີ 4 : ສ້າງໃຫ້ອົງການປົກຄອງຂັ້ນທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງດ້ານການຫັນເປັນດິຈິຕອນ ມີຄວາມເຂັ້ມແຂງໃນການຄຸ້ມຄອງສື່ສັງຄົມອອນລາຍ.**

1) ປັບປຸງແບບແຜນວິທີເຮັດວຽກ ຂອງຄະນະກຳມະການ ຄຸ້ມຄອງອິນເຕີເນັດ ແລະ ເພື່ອການຫັນເປັນດິຈິຕອນ ຂັ້ນແຂວງໃຫ້ມີຄວາມເຂັ້ມແຂງ.
2) ສ້າງແບບດຳເນີນວຽກງານ ຂອງຄະນະກຳມະການໃຫ້ສອດຄ່ອງໃນແຕ່ລະປີ, ມີກອງປະຊຸມສະຫຼຸບຖອດຖອນບົດຮຽນໃນແຕ່ລະໄລຍະຢ່າງເປັນປົກກະຕິ.
3) ມີຄະນະກຳມະການຄຸ້ມຄອງອິນເຕີເນັດ ແລະ ເພື່ອການຫັນເປັນດິຈິຕອນຂັ້ນແຂວງ, ເມືອງ ແລະ ຕາແສງ ທີ່ເຂັ້ມແຂງ ສາມາດຕອບໂຕ້ຂ່າວທີ່ບິດເບືອນຢ່າງທັນການ, ເຈົ້າການຕ້ານການໂຈມຕີທາງໄຊເບີ ແລະ ການຫຼອກລວງທາງສັງຄົມ, ອອນລາຍຢ່າງທັນການ.
4) ສ້າງຕົວເມືອງໃຈກາງຂອງແຂວງ, ມີແນວຄິດຫັນຕົວເມືອງອັດສະລິຍະດ້ວຍເລີ່ມຈາກການປັບປຸງກ້ອງວົງຈອນປິດ, ອອກບັດປະຈຳຕົວດິຈິຕອນ ແລະ ປື້ມຄຸ້ມຄອງສຳມະໂນຄົວຫັນເປັນດິຈິ

ຕອນ ໃນນີ້ເການອາຍຸອອກບັດປະຈຳຕົວ ໃຫ້ກວມເອົາ 80% ຂອງເປົ້າໝາຍ ແລະ ລະບົບສຳມະໂນຄົວດິຈິຕອນ ກວມເອົາ 90% ຂຶ້ນໄປ.

**ເປົ້າໝາຍທີ III: ສົ່ງເສີມ ແລະ ນຳໃຊ້ວິທະຍາສາດ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເພື່ອຍົກສູງປະສິດທິພາບການຜະລິດ.**

**1. ຄາດໝາຍຕົວຊີ້ວັດ**

1) ໂຄສະນາ ເຜີຍແຜ່ ພາລະບົດບາດ, ສິດ, ໜ້າທີ່ ແລະ ບັນດານິຕິກຳ ທີ່ກ່ຽວຂ້ອງກັບວຽກງານເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈຢ່າງກ້ວາງຂວາງ ກວມເອົາ 65% ຂອງກຸ່ມເປົ້າໝາຍ;
2) ເກັບກຳຂໍ້ມູນສະຖິຕິການນຳໃຊ້ເຕັກໂນໂລຊີ ຢູ່ໃນຂົງເຂດການຜະລິດອຸດສາຫະກຳ, ກະສິກຳ ແລະ ການບໍລິການ ພາຍໃນຂອບເຂດຄວາມຮັບຜິດຊອບ ໃຫ້ໄດ້ 85% ຂອງຫົວໜ່ວຍທຸລະກິດທັງໝົດ;
3) ເຂົ້າຮ່ວມສຳມະນາ ແລະ ຝຶກອົບຮົມພາລະບົດບາດ, ຄວາມຮູ້ກ່ຽວກັບເຕັກໂນໂລຊີ ແລະ ນຳວັດຕະກຳ, ການສົ່ງເສີມທຸລະກິດສະຕາດອັບ ແລະ ການຖ່າຍທອດເຕັກໂນໂລຊີ ແລະ ພົວພັນປະສານງານກັບພາກສ່ວນ ກ່ຽວຂ້ອງເພື່ອຖອດຖອນບົດຮຽນວຽກງານເຕັກໂນໂລຊີ ແລະ ນະວັດຕະກຳເປັນແຕ່ລະໄລຍະ.

**2. ແຜນງານຈຸດສຸມທີ 1: ສົ່ງເສີມ ແລະ ນຳໃຊ້ວິທະຍາສາດ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເພື່ອຍົກສູງປະສິດທິພາບການຜະລິດ.**

1) ຜັນຂະຫຍາຍແຜນການ ຂອງພະແນກກ່ຽວກັບວຽກງານເຕັກໂນໂລຊີ ແລະ ນະວັດຕະກຳ ມາເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳລະອຽດ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ພ້ອມທັງຈັດຕັ້ງປະຕິບັດຢ່າງຖືກຕ້ອງ;
2) ໂຄສະນາເຜີຍແຜ່ໃຫ້ສັງຄົມຮູ້ຈັກ ແລະ ນຳໃຊ້ຜະລິດຕະພັນ ແລະ ການບໍລິການ ທີ່ກ່ຽວຂ້ອງກັບວຽກງານເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ໃຫ້ໄດ້ 05 ຄັ້ງຂຶ້ນໄປ;
3) ລົງສຳຫຼວດ, ເກັບກຳຂໍ້ມູນສະຖິຕິບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການການຜະລິດ, ການບໍລິການ, ການນຳເຂົ້າ-ຈັດຈຳໜ່າຍ ຜະລິດຕະພັນເຕັກໂນໂລຊີ ແລະ ນະວັດຕະກຳພາຍໃນແຂວງ 1-2 ຄັ້ງຕໍ່ປີ;
4) ຊຸກຍູ້, ສົ່ງເສີມບັນດາຫົວໜ່ວຍການຜະລິດ ອຸດສາຫະກຳ, ກະສິກຳ ແລະ ການບໍລິການໂດຍສະເພາະເປົ້າໝາຍທຸລະກິດສະຕາດອັບ ໃຫ້ຫັນມານຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ນະວັດຕະກຳໃໝ່ທີ່ກ້າວໜ້າ ເປັນມິດກັບສິ່ງແວດລ້ອມຕາມນະໂຍບາຍການຫັນເປັນທັນສະໄໝຂອງລັດຖະບານຢ່າງກວ້າງຂວາງ ແລະ ກ້າວກະໂດດ;

5) ຄຸ້ມຄອງ, ການນຳເຂົ້າ, ການປະດິດສ້າງ ແລະ ການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ຢູ່ພາຍໃນແຂວງໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
6) ກວດສອບ, ຕີລາຄາ ແລະ ຢັ້ງຢືນເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ກັບເຈົ້າຂອງສິດນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳຕາມຂອບເຂດ ສິດ,ໜ້າທີ່, ພາລະບົດບາດ, ຄວາມຮັບຜິດຊອບຂອງຂະແໜງການຕົນ;
7) ເປັນໃຈກາງປະສານສົມທົບກັບຫົວໜ່ວຍທຸລະກິດ, ເຈົ້າຂອງເຕັກໂນໂລຊີ ແລະ ນະວັດຕະກຳເພື່ອຈັດງານສະແດງເຕັກໂນໂລຊີ ແລະ ນະວັດຕະກຳຢູ່ພາຍໃນແຂວງ.

## ພາກທີ III

## ມາດຕະການ ແລະ ວິທີຈັດຕັ້ງປະຕິບັດແຜນພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານແຂວງໄຊຍະບູລີ 05 ປີ ( 2026-2030 )

### I. ມາດຕະການ

1. ດຳເນີນກອງປະຊຸມຈັດຕັ້ງເຜີຍແຜ່ ແຜນພັດທະນາ 05 ປີ (2026-2030) ໃຫ້ຖັນແຖວພະນັກງານລັດຖະກອນພາຍໃນຂອບເຂດຄວາມຮັບຜິດຊອບ ໃນຂົງເຂດວຽກງານເຕັກໂນໂລຊີ ແລະ ການສື່ສານ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງເປັນເອກະພາບ ນັບແຕ່ຂັ້ນແຂວງ, ເມືອງ, ຕາແສງ ແລະ ຮາກຖານຊຸມຊົນຂັ້ນບ້ານ;
2. ທຸກຂະແໜງ ໃນຂົງເຂດ ເຕັກໂນໂລຊີ ແລະ ການສື່ສານ ຕ້ອງຫັນເອົາທິດທາງ ແຜນພັດທະນາ ໄປຫັນເປັນແຜນການ, ໂຄງການ ອັນລະອຽດຂອງຕົນ, ກຳນົດແຕ່ລະໜ້າວຽກ ເປັນແຕ່ລະໄລຍະ ມີຈຸດສຸມຊັດເຈນ;
3. ເພີ່ມທະວີການປະສານງານຢ່າງກົມກຽວ ລະຫວ່າງ ລັດດ້ວຍກັນ (ລະຫວ່າງ ສາຍຕັ້ງ ແລະ ສາຍຂວາງ) ພາກລັດກັບເອກະຊົນ ກ່ຽວກັບການຈັດຕັ້ງປະຕິບັດ ແລະ ຕິດຕາມແຜນພັດທະນາຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ;
4. ສ້າງຂອດການປະສານງານ ລະຫວ່າງ ພາກລັດ ແລະ ເອກະຊົນ ໃນການຮ່ວມກັນຈັດຕັ້ງປະຕິບັດແຜນພັດທະນາ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ໄດ້ຕາມແຜນການ ທີ່ວາງໄວ້.

### II. ວິທີການຈັດຕັ້ງປະຕິບັດ

1. ເພື່ອຮັບປະກັນຈຸດໝາຍລວມການພັດທະນາ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ທີ່ວາງໄວ້ໃຫ້ໄດ້ຮັບໝາກຜົນ ບັນດາຂະແໜງການ, ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ, ບັນດາສາຂາບໍລິສັດ ໄປສະນີ ແລະ ໂທລະຄົມມະນາຄົມ ຕ້ອງຍົກສູງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນ,

ຂະ ແໜງການ, ບຸກຄົນຢ່າງຈະແຈ້ງ ເພື່ອໃຫ້ຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດທຸກໜ້າວຽກ ໄດ້ຢ່າງມີປະສິດທິຜົນ;

2. ການຈັດຕັ້ງປະຕິບັດແຜນການ 05 ປີ ໃນແຕ່ລະໄລຍະ ຂະແໜງການພາຍໃນ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ຫ້ອງການປະຈຳເມືອງ, ບັນດາບໍລິສັດໄປສະນີ ແລະ ໂທລະຄົມມະນາຄົມ, ພາກສ່ວນອື່ນໆທີ່ກ່ຽວຂ້ອງຕ້ອງໄດ້ຜັນຂະຫຍາຍອອກເປັນແຜນງານ, ໂຄງການດຳເນີນງານ, ມີແຜນ ຄົນຮັບຜິດຊອບ ແລະ ມີງົບປະມານສະໜັບສະໜູນຢ່າງພຽງພໍ ເພື່ອໃຫ້ແຕ່ລະຄາດໝາຍໄດ້ບັນລຸ ຕາມແຜນການກຳນົດໄວ້.
3. ດຳເນີນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ ຕ້ອງຊອກໃຫ້ເຫັນ ດ້ານຕັ້ງໜ້າ, ດ້ານຫຍໍ້ທໍ້, ບັນດາບົດຮຽນທີ່ຖອດຖອນໄດ້ ແລະ ຫາວິທີທາງການແກ້ໄຂໃຫ້ທັນເວລາຢ່າງເປັນລະບົບໃນແຕ່ລະໄລຍະ.

## *ເອກະສານຊ້ອນທ້າຍ*

1. ຕາຕະລາງສະຖິຕິຕົວຊີ້ວັດ ແຜນພັດທະນາ 5 ປີ ( 2021 – 2025 ).
2. ຕາຕະລາງສະຖິຕິຄາດໝາຍຂອງແຕ່ລະເປົ້າໝາຍ 5 ປີ ( 2026 – 2030 ).
3. ໂຄງການສະໜັບສະໜູນ ແຜນພັດທະນາ 5 ປີ ( 2026 – 2030 ).

# ສາລະບານ ຕາຕາລາງສະຖິຕິ ດ້ານເຕັກໂນໂລຊີ ແລະການສື່ສານ

1. ຕາຕາລາງ ບໍລິສັດທີ່ໃຫ້ບໍລິການດ້ານໄປສະນີພາຍໃນແຂວງໄຊຍະບູລີ
2. ຕາຕາລາງ ໂຄງລ່າງພື້ນຖານຂອງສາຂາບໍລິສັດໄປສະນີພາຍໃນແຂວງໄຊຍະບູລີ
3. ຕາຕາລາງ ບໍລິມາດຜະລິດດ້ານໄປສະນີສາຂາບໍລິສັດໄປສະນີລາວ ແຂວງໄຊຍະບູລີ ພາຍໃນປະເທດ
4. ຕາຕາລາງ ບໍລິມາດຜະລິດດ້ານໄປສະນີສາຂາບໍລິສັດໄປສະນີລາວ ແຂວງໄຊຍະບູລີ ຕ່າງປະເທດ
5. ຕາຕາລາງ ການອອກໃບອານຸຍາດ ບໍລິການດ້ານໄປສະນີ ສາຂາ ແລະ ສູນຄັດແຍກພາຍໃນແຂວງ
6. ຕາຕາລາງ ການອອກໃບອານຸຍາດ ປ່ອງບໍລິການໄປສະນີແບບແຟນຊາຍ ພາຍໃນແຂວງໄຊຍະບູລີ
7. ຕາຕາລາງ ຈໍານວນ ສາຂາ/ປ່ອງບໍລິການ ( ແຟນຊາຍ ) ດ້ານໄປສະນີແຍກຕາມເມືອງ
8. ຕາຕາລາງ ຈໍານວນ ມາດຕະຖານ ປ່ອງບໍລິການ ສາຂາ/ສູນຄັດແຍກ ດ້ານໄປສະນີ
9. ຕາຕາລາງ ລາຍຮັບດ້ານ ດ້ານໄປສະນີ
10. ຕາຕາລາງ ບໍລິສັດທີໃຫ້ບໍລິການດ້ານໂທລະຄົມມະນາຄົມ ພາຍໃນແຂວງ
11. ຕາຕາລາງ ຈໍານວນເຄືອຂ່າຍ ແລະ ສະຖານີໃຫ້ບໍລິການ ດ້ານໂທລະຄົມມະນາຄົມ ພາຍໃນແຂວງ
12. ຕາຕາລາງ ການເຂົ້າເຖິງ ໄອຊີທີ ຂອງ ປະຊາກອນ ແຂວງໄຊຍະບູລີ
13. ຕາຕາລາງ ຜູ້ລົງທະບຽນນໍາໃຊ້ເບີມືຖື ຜ່ານ ຊິມໂທ ແລະ ຊິມເນັດ ຂອງ ແຂວງ ໄຊຍະບູລີ
14. ຕາຕາລາງ ຈໍານວນຜູ້ລົງທະບຽນນໍາໃຊ້ໂທລະສັບຕັ້ງໂຕະ ຂອງ ແຂວງ ໄຊຍະບູລີ
15. ຕາຕາລາງ ຈໍານວນຜູ້ລົງທະບຽນນໍາໃຊ້ ໂທລະສັບຕັ້ງໂຕທັງໝົດ ( ບໍ່ມີສາຍ) ແຍກຕາມເມືອງ
16. ຕາຕາລາງ ຈໍານວນຜູ້ລົງທະບຽນນໍາໃຊ້ໂທລະສັບຕັ້ງໂຕະມີສາຍແຍກຕາມເມືອງ ຂອງ ແຂວງ ໄຊຍະບູລີ
17. ຕາຕາລາງ ຈໍານວນຜູ້ລົງທະບຽນນໍາໃຊ້ໂທລະສັບຕັ້ງໂຕະບໍ່ມີສາຍແຍກຕາມເມືອງ ຂອງ ແຂວງ ໄຊຍະບູລີ
18. ຕາຕາລາງ ຈໍານວນການລົງທະບຽນນໍາໃຊ້ໂທລະສັບມືຖືທັງໝົດ ( Active Number)
19. ຕາຕາລາງ ຈໍານວນຜູ້ລົງທະບຽນນໍາໃຊ້ ໂທລະສັບມືຖື ( Active Number) ທຽບໃສ່ປະຊາກອນແຕ່ລະເມືອງ ແຂວງ ໄຊຍະບູລີ
20. ຕາຕາລາງ ຈໍານວນການລົງທະບຽນນໍາໃຊ້ອິນເຕີເນັດແບບໃຊ້ສາຍ ແລະ ອິນເຕີເນັດຜ່ານມືຖື
21. ຕາຕາລາງ ຈໍານວນການລົງທະບຽນນໍາໃຊ້ອິນເຕີເນັດ ( Active Number) ແຍກຕາມເມືອງ
22. ຕາຕາລາງ ຈໍານວນການລົງທະບຽນນໍາໃຊ້ອິນເຕີເນັດແບບໃຊ້ສາຍ ( Active Number) ແຍກຕາມ ເມືອງ ແຂວງ ໄຊຍະບູລີ
23. ຕາຕາລາງ ຈໍານວນການລົງທະບຽນນໍາໃຊ້ອິນເຕີເນັດຜ່ານມືຖື ( Active Number) ແຍກຕາມເມືອງ
24. ຕາຕາລາງ ເປີເຊັນການລົງທະບຽນນໍາໃຊ້ ອິນເຕີເນັດ (ແບບມີສາຍ ແລະ ອິນເຕີເນັດ ຜ່ານມືຖື) ທຽບໃສ່ປະຊາກອນແຕ່ລະເມືອງ
25. ຕາຕາລາງ ລາຍຮັບດ້ານ ດ້ານໂທລະຄົມມະນາຄົມ ພາຍໃນແຂວງ ໄຊຍະບູລີ
26. ຕາຕາລາງ ຈໍານວນຮ້ານ ແລະ ບໍລິສັດທີ່ເຮັດທຸລະກິດດ້ານ ICT ພາຍໃນແຂວງໄຊຍະບູລີ

27. ຕາຕາລາງ ຈຳນວນການນຳໃຊ້ໂປຣແກັມພາກລັດ ພາຍໃນແຂວງໄຊຍະບູລີ
28. ຕາຕາລາງ ຈຳນວນພະນັກງານທັງໝົດທີ່ຢູ່ໃນພະແນກ ຕສ ແຂວງໄຊຍະບູລີ
29. ຕາຕາລາງ ຈຳນວນພະນັກງານ ຫ້ອງການ ຕສ ເມືອງ ແລະ ຜູ້ປະສານງານ ທັງໝົດທີ່ຢູ່ໃນພະແນກ ຕສ ແຂວງໄຊຍະບູລີ
30. ຕາຕາລາງ ຈຳນວນພະນັກງານ ທັງໝົດທີ່ຢູ່ໃນພະແນກ ຕສ ແຂວງໄຊຍະບູລີ ແຍກຕາມປະເພດ ພະນັກງານ.
31. ຕາຕາລາງ ຈຳນວນພະນັກງານໄປຍົກລະດັບຮຽນຕໍ່ ພາຍໃນ ແລະ ຕ່າງປະເທດ ຂອງ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງໄຊຍະບູລີ
32. ຕາຕາລາງ ຈຳນວນພະນັກງານ ທັງໝົດ ແຍກຕາມລະດັບການສຶກສາ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງໄຊຍະບູລີ
